# ທຸງຊາດລາວ



## ທຸງໄຊສະເຫລີມພົນ

ທໍາ ໄຊຍະສິດເສນາ



ທຸງຊາດລາວ - ທຸງວິງເດືອນ.
ຕາມຂະໜາດມາຕາຖານທີ່ເປັນເອກະລັກຖືກຕ້ອງ.

# ທຸງຊາດລາວ

## - ທຸງວົງເດືອນ -

ແມ່ນສໍາເລັດປາກົດການດວງເດັ່ນດວງໜຶ່ງ
ຂອງຊາດລາວ.

ມອບໄວ້ເປັນສົມບັດຂອງ
ຫໍສະໝຸດ ສີລາ ວີຣະວົງສ໌.

26/12/2004

ທໍາ ໄຊຍະສິດເສນາ

ຜູ້ລິດຈະນາ : ທໍາ ໄຊຍະສິດເສນາ

# ສາລະບານ

| | ໜ້າ |
|---|---|
| ອາລຳພະບົດ | ກ |
| ຄຳນຳ | ຄ |
| ທ່ານ ແຈ້ງ ໄຊຍະວົງ | ຍ |
| ຄຳເຫັນຂອງປ້າຄຳຈັນ ສະຕຣີຜູ້ຫຍິບທຸງຊາດລາວຜືນທຳອິດ | ຕ |
| ຄຳຊົມເຊີຍ ທ່ານ ທຸມພັນ ລັດຕະນະວົງ | ບ |
| ຄຳປາລົບຂອງທ່ານ ປຣິນຍາເອກ ເຜີຍພັນ ເຫວົ້າສີວັດທະນາ | ປ |
| ໂທລະສັບໄຂຄວາມລັບ ທ່ານ ນິວັດ ວົງສິນ | ຝ |
| ທຸງຊາດລາວ | 1 |
| ຄວາມເປັນມາ | 2 |
| ທ່ານຜູ້ໃດເປັນຜູ້ເລີ້ມຕົ້ນສ້າງທຸງຂຶ້ນ | 4 |
| ປະເພດ - ຄວາມໝາຍຂອງທຸງ | 6 |
| ທຸງຊາດ | 7 |
| ປະດັບຫຼຽນໄຊທຸງໄຊສະເຫຼີມພົນ | 8 |
| ທຸງພຸດທະສາດສະໜາ | 9 |
| ທຸງສະຫະປະຊາຊາດ | 11 |
| ທຸງກິລາໂອແລມປິກ | 12 |
| ກຳເນີດທຸງຊາດລາວ | 14 |
| ວົງເດືອນຍານບຸສະຕີ - ບົດຄຳກອນ | 21 |
| ລາວມີທຸງຊາດລາວແລ້ວ | 22 |

ທຸງຊາດ - ບົດລຳກອນ 36
ເອກະລັກທຸງຊາດລາວ 37
ຄວາມໝາຍ ແລະ ຄວາມອະທິບາຍ 38
ທຸງຊາດປະຕິບັດໜ້າທີ່ຂອງຕົນຄືແບບນີ້ 44



ທ່ານ ທໍາ ໄຊຍະສິດເສນາ

# ອາລຳພະບົດ

ເອກະລັກຮາກຖານອັນສຳຄັນອັນໜຶ່ງ ຂອງຊາດໜຶ່ງຊາດໃດ ໃນໂລກປະຈຸບັນ ແມ່ນທຸງຊາດ ຊຶ່ງຄົນໃນຊາດຕ່າງພາກັນເຄົາລົບທັງເຊົ້າທັງແລງ.

ກ່ອນປີ ຄ.ສ. 1945 ບັນຫາຂອງທຸງຊາດລາວຍັງມືດມົນບໍ່ຈະແຈ້ງແຈ່ມໃສ. ເພາະລາວຕົກເປັນຫົວເມືອງຂຶ້ນຂອງຊາດຕ່າງດ້າວສອງຊາດຕິດຕໍ່ກັນຍາວນານ, ຈົນກ່າວໄດ້ວ່າ ລາວບໍ່ມີທຸງຊາດຂອງຕົນ. ຊາດຕ່າງດ້າວຜູ້ເປັນນາຍ, ຕ່າງນຳເອົາທຸງຊາດຂອງຕົນເຂົ້າມາບັງຄັບໃຊ້ຢູ່ໃນດິນລາວເປັນທີ່ໜ້າອົດສູອັບອາຍຂາຍໜ້າ.

ການເວລາລ່ວງກາຍມາຫຼາຍກວ່າ 1000 ປີ ເປັນທີ່ໜ້າເສຍດາຍທີ່ບໍ່ມີຜູ້ໃດມີຈິດວິນຍານປະດິດຄິດສ້າງທຸງຊາດ ປະດັບຊາດລາວໃຫ້ມີກຽດມາກ່ອນ. ( ໄດ້ຄົ້ນຄວ້າຫາເອກະສານພິສູດບໍ່ໄດ້ ... ກ້າຜູ້ໃດມີກໍ່ຂໍອະໄພນຳ ... ແລະ ຈະຂໍຍົກເອົາມາອ້າງອີງເປັນຫຼັກການຊີ້ພິສູດໃນທີ່ນີ້ ).

ຄັນຮອດປີ ຄສ. 1940 ຈຶ່ງມີການກໍ່ຕັ້ງຂະບວນການກູ້ເອກະລາດ ລາວອິດສະຫຼະ ຫຼື ຂະບວນການລາວເປັນລາວ ( ລປລ ) (ລາວບໍ່ເປັນອື່ນ) ຂຶ້ນ ແລະ ໄດ້ມີການ ປະດິດຄິດສ້າງທຸງຊາດລາວຂຶ້ນໃຊ້ຢ່າງອົງອາດກ້າຫານ, ທຳລາຍລຶບລ້າງທຸງຊາດຂອງຕ່າງດ້າວຜູ້ເປັນນາຍນັ້ນກ້ຽມລາບຄາບ.

ທຸງຊາດຜືນນີ້ ຊື່ວ່າທຸງວົງເດືອນ " ເປັນທຸງທີ່ຊາດລາວໝົດ

ທັງຊາດພາກພູມໃຈເທີດທູນໃຊ້ມາເທົ່າເຖິງທຸກວັນ.

ຊາດທຸກຊາດໃນອົງການສາກົນສະຫະປະຊາຊາດ ແລະ ຊາດທຸກຊາດໃນໂລກ ໄດ້ພ້ອມພາກັນຮັບຮູ້ເຊີດຊູທຸງຊາດລາວຈຶ່ງປິວສະບັດພັດແກວ່ງຢູ່ທຸກແຫ່ງຫົນໃນໂລກ, ຢູ່ບົນດິນ, ຢູ່ບົນນ້ຳ,ຢູ່ບົນຟ້ານະພາກາດ.

ຍິ່ງໄປກວ່ານັ້ນ ລູກລາວທຸກຄົນກໍ່ພ້ອມພາກັນພາກພູມພໍໃຈກັບທຸງຜືນນີ້ເປັນທະວີຄູນ.

ການສະແຫວງຫາຮູ້ປະຫວັດຄວາມເປັນມາ ຂອງທຸງຊາດລາວຜືນນີ້ ຈຶ່ງຄວນເປັນສິ່ງທີ່ທ່ານຜູ້ອ່ານຈະໄດ້ສົນໃຈຕິດຕາມສຶກສາຄົ້ນຄວ້າຫາຂໍ້ມູນຄວາມຈິງ ອັນເປັນທາດແທ້ຂອງທຸງຊາດລາວຕໍ່ໄປ. ໜັງສືນ້ອຍເຫຼັ້ມນີ້ ແມ່ນບັນທຶກແຫຼ່ງເກີດຂໍ້ມູນທີ່ກ່າວນັ້ນຈາກປາກກາຂອງຜູ້ຢູ່ໃນເຫດການ ແລະ ທັງເປັນເຈົ້າການດ້ວຍ. ຈຶ່ງຫວັງວ່າທ່ານຜູ້ອ່ານຈະໄດ້ປະໂຫຍດຈາກໜັງສືເຫຼັ້ມນີ້ ຕາມສົມຄວນ.

ວັນທີ 12 ຕຸລາ ປີ 2000

ຜູ້ຂຽນ :

ທ. ທໍາ ໄຊຍະສິດເສນາ

# ຄຳນຳ

ໃນປີ 1994 ໄດ້ມີການປະຊຸມນາໆ ຊາດ ຢູ່ກະຊວງການຄ້າ ທີ່ວຽງຈັນ ໂດຍແມ່ນກະຊວງການຄ້າ ແລະ ກະຊວງກະແຫຼງຂ່າວ ແລະ ວັດທະນະທຳຈັດຂຶ້ນ ໃນຫົວຂໍ້ວ່າດ້ວຍການວິວັດ ວັດທະນະທຳ ຕິດພັນກັບເສດຖະກິດການຄ້າ. ໃນກອງປະຊຸມນັ້ນ ມີຂາປະຊຸມທີ່ເປັນຊາວຕ່າງປະເທດຜູ້ໜຶ່ງໄດ້ຕັ້ງຄຳຖາມຂຶ້ນວ່າ : ທຸງຊາດລາວ ໃນປະຈຸບັນມີຄວາມເປັນມາແນວໃດ ແລະ ມີຄວາມໝາຍແນວໃດ ? ຂາປະຊຸມຄົນລາວບາງຄົນ ຢາກຕອບອະທິບາຍ ແຕ່ອຶດອັດໃນໃຈບໍ່ກ້າຕອບເພາະບໍ່ໄດ້ຂໍ້ມູນຫຼັກຖານພຽງພໍ. ຈຶ່ງສະເໜີໃຫ້ທ່ານ ທຳ ໄຊຍະສິດເສນາ ເປັນຜູ້ຕອບອະທິບາຍສູ່ຟັງ ເພາະທ່ານ ທຳ ແມ່ນຜູ້ທີ່ເປັນເຈົ້າການອອກຫົວຄິດປະດິດສ້າງທຸງຊາດລາວ ໃນການະເປັນຂະບວນການກູ້ເອກະລາດລາວອິດສະຫຼະ ນັບແຕ່ປີ 1933 ເປັນຕົ້ນມາ.

ຫ້າມຈຳໜ່າຍ

ຫຼັງຈາກໄດ້ອະທິບາຍເລື່ອງທຸງຊາດສູ່ກອງປະຊຸມຟັງຍືດຍາວ ແລະ ທັງໄດ້ຕອບຄຳຖາມຫຼາຍຄຳຖາມທີ່ຖາມຂຶ້ນແລ້ວ, ປະທານ ແລະ ຂາປະຊຸມ ໄດ້ຂໍຮ້ອງໃຫ້ ທ່ານ ທຳ ຜູ້ທີ່ໄດ້ສະສົມຂໍ້ມູນ ແລະ ຄວາມຊົງຈຳຈາກການຕໍ່ສູ້ຂອງຊີວິດຈິງ ຂຽນເລື່ອງທຸງຊາດລາວ ຂຶ້ນເປັນເຫຼັ້ມໜັງສື ເພື່ອເປັນຫຼັກຖານໝັ້ນຄົງ.

ອັນນີ້ຄືເຫດຜົນອັນໜຶ່ງ ທີ່ພາໃຫ້ຜູ້ຂຽນຕິດໃຈຂຽນ ເລື່ອງທຸງຊາດລາວ ຕາມປະສົງຂອງສັງຄົມຜູ້ຢາກຮູ້ຄວາມຈິງແທ້ຂອງປະຫວັດສາດຕອນໜຶ່ງແຫ່ງການຕໍ່ສູ້ເພື່ອເອກະລາດ ແລະ ການວິວັດພັດທະນາຂອງຊີວິດຄົນລາວເຮົາໃນເລື່ອງເສດຖະກິດສັງຄົມ ແລະ ຜູ້ຂຽນກໍບໍ່ໄດ້ມີຈຸດປະສົງຂຽນຂຶ້ນເພື່ອອວດອ້າງຜົນງານ ແລະ ຄຸນງາມຄວາມດີຂອງຕົນເອງແຕ່ປະການໃດເລີຍ.

ການຂຽນນີ້ຍັງມີສິ່ງດຶງດູດໃຫ້ຂຽນ ສິ່ງນັ້ນຄືວິນຍານອັນມີຊີວິດຈິດໃຈຂອງທຸງຊາດເອງ ທີ່ມີເອກະລັກພິເສດງົດງາມມີຄວາມໝາຍຊາບຊຶ້ງ ສະກິດເຕືອນໃຈຄົນລາວໃຫ້ມີສະຕິຮູ້ຕົວເພື່ອທຳຄວາມດີຫຼີກເວັ້ນຄວາມຊົ່ວ. ທຸງຊາດມີປະຫວັດລະອຽດລະອ້ຽວຝ່າຟັນອຸປະສັກຕໍ່ສູ້ຢູ່ລອດມາໄດ້ຈົນເທົ້າທຸກວັນ ທີ່ໜ້າຮູ້ໜ້າຮຽນຄົ້ນຄວ້າເປັນກຳໄລຊີວິດ.

ທີ່ວ່າຕໍ່ສູ້ຢູ່ລອດມາໄດ້ນັ້ນກໍຍ້ອນວ່າມີການຕໍ່ສູ້ດຸເດືອດຈິງຈັງຍາວນານ 50 ກວ່າປີ, ຕໍ່ສູ້ທີ່ເຕັມໄປດ້ວຍອັນຕະລາຍ, ເສຍຊີວິດເລືອດເນື້ອທາແຜ່ນດິນ ທັງຢູ່ໃນພູຜາປ່າດົງ ກ້ຳເຫວ ແລະ ຢູ່ໃນຕົວເມືອງ.

ນັບຈາກວັນທີ່ທຸງຊາດເກີດຂຶ້ນ ໃນວັນທີ 12 ຕຸລາ ປີ 1945 ເປັນຕົ້ນມາ ມະຫາຊົນຄົນລາວບັນດາເຜົ່າຜູ້ກ້າຫານ, ຮູ້ເສຍສະຫຼະໄດ້ທ້ອນໂຮມແຮງສາມັກຄີເຂົ້າກັນມາກ່ອນນີ້ ເປັນຂະບວນການກູ້ເອກະລາດ ລາວອິດສະຫຼະຊື່ວ່າ ຄະນະລາວເປັນລາວ ( ລປລ ) : ເປັນຂະບວນການແນວລາວອິດສະຫຼະ, ເປັນແນວລາວຮັກຊາດ,

ເປັນພັກປະຊາຊົນປະຕິວັດລາວອັນກ້າແກ່ນແພ້ນໜາ, ເປັນແນວລາວສ້າງຊາດ, ຕ່າງໄດ້ພາກັນໃຊ້ທຸງຊາດຜືນນີ້ອອກໜ້າເບີກທາງສູ້ລົບເອົາຊະນະສັດຕູເລື້ອຍມາ ຈົນສາມາດປົດປ່ອຍຊາດ, ປະກາດເອກະລາດຄັ້ງແລກໃນວັນທີ 12 ຕຸລາ 1945, ສາມາດລົບລ້າງລະບອບລາຊາທິປະໄຕ, ປະກາດໃຊ້ລະບອບປະຊາທິປະໄຕ, ລວມແຜ່ນດິນລາວເປັນແຜ່ນດິນດຽວ ແລະ ໃນວັນທີ 2 ທັນວາ ປີ 1975 ກໍ່ສາມາດປ່ຽນລາຊະອານາຈັກລາວສະກຸາປະນາຂຶ້ນເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ພ້ອມກັບປະກາດໃຊ້ລະບອບການປົກຄອງປະຊາທິປະໄຕ ປະຊາຊົນ ພາຍໃຕ້ຮົ່ມທຸງວົງເດືອນຜືນນີ້ ອັນເປັນເຄື່ອງໝາຍຕົວແທນແປວໄຟຈິດໃຈຮັກຊາດກ້າແກ່ນຫ້າວຫັນ, ຂະບວນມະຫາຊົນເຫຼົ່ານັ້ນກໍ່ສາມາດຍາດເອົາໄຊຊະນະໄດ້ຮອບດ້ານ ກ້າວຂຶ້ນສູ່ເວທີສາກົນການເມືອງນາໆ ຊາດແບບຄຽງບ່າຄຽງໄຫຼ່ສະເໝີພາບຢ່າງອົງອາດທະນົງສີ ແລະ ກຳອຳນາດບໍລິຫານປະເທດມາໄດ້ຈົນເທົ່າທຸກວັນນີ້.

ປະຈຸບັນທຸງຊາດລາວປິວສະບັດພັດແກວ່ງ ຢູ່ຫຼາຍແຫ່ງທົ່ວໂລກ: ໃນສຳນັກງານສະຫະປະຊາຊາດ, ທີ່ກອງເລຂາອາຊຽນ, ຕາມສະຖານທູດ ແລະ ຫ້ອງການຜູ້ຕາງໜ້າລາວໃນຕ່າງປະເທດທຸກປະເທດ ແລະ ອື່ນໆ ອັນເປັນກຽດສັກສີທະນົງອົງອາດຂອງຊາດລາວຂອງຄົນລາວທຸກຄົນທີ່ພາກພູມພໍໃຈໃນທຸງຜືນນີ້ ແລະຕ່າງກໍ່ໄດ້ພ້ອມພາກັນທຳຄວາມເຄົາລົບທຸກເຊົ້າແລງ.ທຸງຊາດລາວເປັນຂອງລາວແລ້ວທຸກຄົນ.



ສະໜາມລົບບ້ານທ່າເດື່ອ
ວັນທີ 3 - 4 ເດືອນ ມັງກອນ ປີ 1946
ໄຊຊະນະຍິ່ງໃຫຍ່ຄັ້ງແລກ
ຂອງທະຫານລາວອິດສະຫລະ
ພາຍໃຕ້ຄັນທຸງໄຕຣລົງວົງເດືອນ.
ທະຫານສັດຕູ 1 ກອງຮ້ອຍ ບັນຊາໂດຍ
ຮ້ອຍເອກ ມາເຊ ກໍ່ກຕິທຳລາຍໝົດກ້ຽງ.

ສິ່ງໜຶ່ງທີ່ຕ້ອງຂຽນໄວ້ຕື່ມ ກໍຄືສ່ວນປະກອບທີທ່ານ ດຣ. ຈັນທະພິລິດ ຈຽມສີສຸລາດ ໄດ້ກະລຸນາໃຫ້ໄວ້ກັບໜັງສືເຫຼັ້ມນີ້. ໃນເວລາສຳຫຼວດກວດກາເນື້ອໃນສຳນວນຂອງໜັງສື, ທ່ານໄດ້ໃຫ້ທັດສະນະ ແລະ ຄວາມເຫັນບາງຂອດທີ່ກະຈ່າງແຈ້ງ ທັງໄດ້ສະເໜີໃຫ້ມີລີລາອັນພາໃຫ້ໜັງສືມີຄຸນຄ່າລະອຽດ ເພື່ອຊ່ວຍໃຫ້ຜູ້ອ່ານເຂົ້າໃຈງ່າຍ ແລະ ຕິດຕາມເລື້ອງສະບາຍ. ຊຶ່ງຂ້າພະເຈົ້າຂໍຂອບໃຈດ້ວຍຄວາມຈິງໃຈໄວ້ນະທີ່ນີ້ດ້ວຍ.

ສິ່ງໜຶ່ງທີ່ລືມບໍ່ໄດ້ອີກກໍຄື ການອຸບປະກາລະຂອງທ່ານ ບຸນຮົງ ຫຼວງໂຄດ ຜູ້ອຳນວຍການບໍລິສັດປ່າພ້າວທີ່ປຶກສາຈຳກັດ ທີ່ໃຫ້ການຊ່ວຍເຫຼືອລ້າ ເພື່ອພິມຕົ້ນສະບັບເດີມ (ຂຽນດ້ວຍມື) ມາເປັນຕົ້ນສະບັບພິມດີດກ່ຽວກັບເລື່ອງປະຫວັດທຸງຊາດລາວ ແລະ ປະຫວັດສາດອື່ນໆທຸກເລື່ອງ ທີ່ຜູ້ຂຽນໄດ້ອຸທິດເວລາພຽນຂຽນໄວ້ເປັນມໍລະດົກທາງປັນຍາແກ່ລູກຫຼານລາວ. ຜູ້ຂຽນຈຶ່ງຂໍສະແດງຄວາມຮູ້ບຸນຄຸນ ແລະຂອບອົກຂອບໃຈຢ່າງມາກຫຼາຍ ແລະ ຈິງໃຈໄວ້ນະທີ່ນີ້ດ້ວຍ.

ຈຶ່ງຫວັງວ່າໜັງສືນ້ອຍເຫຼັ້ມນີ້ ຈະມີປະໂຫຍດກ່ຽວເລື່ອງທຸງຊາດລາວແກ່ຜູ້ອ່ານຕາມສົມຄວນ.

ວັນທີ 12 ຕຸລາ ປີ 2000

ຜູ້ຂຽນ



ທ້າວ ທຳ ໄຊຍະສິດເສນາ

# ທ່ານ ແຈ້ງ ໄຊຍະວົງ

ລັດຖະມົນຕີຊ່ວຍວ່າການກະຊວງການຄ້າ ແລະ ທ່ອງທ່ຽວ ປະທານອົງການທ່ອງທ່ຽວແຫ່ງຊາດໃຫ້ທັດສະນະ

ການຄົ້ນຄວ້າປະຫວັດຄວາມເປັນມາ ຫຼືເລື່ອງລາວຕ່າງໆ ຂອງປະເທດຊາດ ແລະ ຂອງປະຊາຊົນບັນດາເຜົ່າລາວເຮົາແລະ ການສະໜອງຂໍ້ມູນຂ່າວສານ ແກ່ຜູ້ສົນໃຈທັງຫລາຍ ທັງພາຍໃນ ແລະ ຕ່າງປະເທດ ເປັນບັນຫາໜຶ່ງສຳຄັນທີ່ສຸດໃນຍຸກສະຕະວັດທີ 21ນີ້ອັນເປັນຍຸກແຫ່ງການເສີມສ້າງສາຍພົວພັນມິດຕະພາບແລະ ການຮ່ວມມືລະຫວ່າງນາໆຊາດ. ເປັນຄວາມຮຽກຮ້ອງຕ້ອງການ ອັນຈຳເປັນໃນການໂຄສະນາເຜີຍແຜ່ ໃຫ້ນາໆຊາດຮູ້ປະເທດລາວ ແລະ ມາທ່ຽວປະເທດລາວນັບມື້ນັບຫລາຍ; ເປັນການຊ່ວຍໃຫ້ຄົນ ລາວເຮົາຮັກຫວງແຫນເອກອ້າງທະນົງໃຈໃນຄວາມເປັນລາວແລະ ທັງຊ່ວຍຍົກການະບົດບາດກຽດສັກສີລາວໃນເວທີສາກົນອີກດ້ວຍ.

ທຸງຊາດລາວ ກໍນັບວ່າເປັນສິ່ງໜຶ່ງ ທີ່ຜູ້ຄົນສົນໃຈໃຄ່ຮູ້........ ໂຊກດີ ແລະ ເປັນບຸນກຸສົນຫລາຍທີ່ ທ່ານ ທຳ ໄຊຍະສິດເສນາ ໄດ້ ກະລຸນາອຸທິດເຫື່ອແຮງສະຕິປັນຍາຂຽນ ແລະພິມປຶ້ມນີ້ຂຶ້ນມາຕາມ ທີ່ໄດ້ຮັບອະນຸຍາດຈາກກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ເພື່ອເປັນອະນຸສອນເຊັ່ນດຽວກັບທີ່ທ່ານໄດ້ປະກອບສ່ວນອອກຫົວຄິດ ປະດິດສ້າງທຸງຊາດຂຶ້ນມາເມື່ອປີ 1945, ອອກແບບປະຕູໄຊ ( ອະນຸສາວະລີ)ແລະ ອື່ນໆ ໄວ້ເປັນມູນມໍລະດົກແກ່ຊົນຊາດລາວເຮົາ.

ຂ້າພະເຈົ້າຫວັງວ່າປຶ້ມຫົວນີ້ ຈະເປັນປະໂຫຍດອັນໃຫຍ່ຫລວງແກ່ບາງຊາດ ຜູ້ສົນໃຈຄົ້ນຄວ້າປະຫວັດຄວາມເປັນມາຂອງລາວ. ແກ່ນັກຄົ້ນຄວ້າ ນັກຂຽນ ນັກຮຽນຮູ້ ປັນຍາຊົນ ແລະ ຜູ້ອ່ານທັງຫຼາຍ ແລະ ກໍ່ເຊື່ອແນ່ວ່າອານຸຊົນຄົນລາວຈະຊ່ວຍກັນປົກປັກຮັກສາ ເຄົາລົບສັກກາລະບູຊາທຸງຊາດລາວໃຫ້ຜ່ອງໃສ ປິວສະບັດກວັດແກວ່ງຢ່າງສະຫງ່າອົງອາດ ຍາວນານຕະຫລອດນິລັນການ.

ວຽງຈັນ, ວັນທີ 29 ກັນຍາ 1999



ນາງ ຄຳຈັນ

ສະໄໝຫຍິບທຸງຊາດຜືນທຳອິດຂອງຊາດລາວ

1945

# ຄຳເຫັນຂອງ ປ້າຄຳຈັນ
# ສະຕຣີຜູ້ຫຍິບທຸງຊາດລາວ ຜືນທຳອິດ

ຂ້າພະເຈົ້າ ເກີດເມື່ອປີ 1913ໃນຕົວເມືອງກຳແພງນະຄອນວຽງຈັນ, ໄດ້ຜ່ານຊີວິດ ແລະ ຮູ້ເຫດການຕ່າງໆມາເກືອບຈະເຂົ້າສັດຕະວັດໜຶ່ງແລ້ວ, ເຫດການເລົ່ານັ້ນຢູ່ໃນຄວາມຊົງຈຳຂອງຂ້າພະເຈົ້າສະເໝີ, ມີທັງເຫດການຊີວິດປະຈຳວັນທຳມະດາທົ່ວໆໄປ ແລະ ມີເຫດການທີ່ໜ້າຄິດເພາະມີຄວາມໝາຍແລະມີຄວາມສຳຄັນທາງດ້ານປະຫວັດສາດກໍ່ມີ.

ຂ້າພະເຈົ້າຍັງລຳລຶກສະເໝີເຖິງມື້ທີ່ໄດ້ຕິດຕາມຫົວໜ້າຄອບຄົວທ່ານ ບຸດດີ ສຸລິຍະສັກທີ່ໄດ້ພາພວກເຮົາອອກຈາກຕົວເມືອງວຽງຈັນໃນປີ1960ເພື່ອເດີນທາງມາຮ່ວມຂະບວນການປະຕິວັດໃນເຂດພາກເໜືອຂອງລາວເຊິ່ງໃນສະໄໝນັ້ນຍັງເອີ້ນວ່າ "ເຂດປົດປ່ອຍ" ຕາມເສັ້ນທາງອັນຍາວນານຂອງການປະຕິວັດແລະປົດປ່ອຍຊາດນັ້ນ ຂ້າພະເຈົ້າໄດ້ຊ່ວຍຫົວໜ້າຄອບຄົວຜ່ານຂ້າມອຸປະສັກຕ່າງໆ, ຜ່ານຄວາມລອດຕາຍ, ສູນເສຍລູກຊາຍໄປຜູ້ໜຶ່ງ........ ແຕ່ກໍຍັງໄດ້ປະກອບສ່ວນສ້າງຜົນງານບາງອັນ ເພື່ອຮັບໃຊ້ປະຊາຊົນບັນດາເຜົ່າ ແລະ ປະເທດຊາດຕາມເຫື່ອແຮງຂອງຜູ້ຍິງໃນ " ເຂດປົດປ່ອຍ " ນັ້ນ. ສາມີຂອງຂ້າພະເຈົ້າເອງໄດ້ຖືກແຕ່ງຕັ້ງໃຫ້ນຳພາພີ່ນ້ອງປະຊາຊົນບັນດາເຜົ່າຈຳນວນໜຶ່ງຮຽນທິດທາງການເມືອງຂອງພັກ

ຫລາຍສະໄໝ ແລະ ໂດຍສະເພາະກໍແມ່ນນຳພາໃນການຜະລິດເຂົ້າປາ ແລະ ສະບຽງອາຫານອື່ນໆຕາມແນວທາງເພິ່ງຕົນເອງ ແລະ ກຸ້ມຕົນເອງ. ບັນດາເອື້ອຍນ້ອງທີ່ຂຶ້ນກັບຄວາມຮັບຜິດຊອບຂອງຂ້າພະເຈົ້ານັ້ນມີປະມານ 300 ກວ່າຄົນ ຊຶ່ງກືວ່າເປັນພາລະທີ່ໜັກສົມຄວນ. ທຸກມື້ນີ້ກໍຍັງຄິດຮອດຄິດເຖິງເຊິ່ງກັນ ແລະ ກັນຢູ່ ໃນການເຄື່ອນໄຫວຕ່າງໆ ຕາມຫ້ອງການ ການຈັດຕັ້ງ ແມ່ນມີທຸງວົງເດືອນປະດັບເປັນສັນຍາລັກ ເປັນວິນຍານບຸກເບີກລະດົມປູກຝັງໃຫ້ຮັກຊາດສາມັກຄີ. ນອກຈາກນັ້ນ ໃນດ້ານຄອບຄົວ ຂ້າພະເຈົ້າຍັງໄດ້ລ້ຽງດູ ແລະ ອູ້ມຊູລູກຫຼານຂອງທ່ານ ບຸດດີ ສຸລິຍະສັກ ໃຫ້ໄດ້ຮັບການສຶກສາ ແລະ ໄດ້ເປັນພະນັກງານຂັ້ນສູງຂອງລັດຫຼາຍຄົນ.

ໃນບັນດາເຫດການຕ່າງໆເຫຼົ່ານີ້, ມີເຫດການໜຶ່ງທີ່ຂ້າພະເຈົ້າບໍ່ລືມໄດ້ໃນຊີວິດແມ່ນໃນເດືອນ ຕຸລາ 1945 ກ່ອນວັນປະກາດວັນທີ 12 ຕຸລາ ຂອງຄະນະລາວອິດສະຫຼະ. ໃນຄືນໜຶ່ງຂ້າພະເຈົ້າໄດ້ຖືກມອບໝາຍພາລະອັນຮີບດ່ວນ ແລະ ສູງສົ່ງທີ່ສຸດໃນຊີວິດຂອງຂ້າພະເຈົ້ານັ້ນຄື : ຂ້າພະເຈົ້າຕ້ອງຫຍິບທຸງຊາດລາວໃຫ້ແລ້ວໃນຄືນວັນທີ 11 ຕຸລາ ເພາະຕອນເຊົ້າຂອງວັນທີ 12 ຕຸລາ ເວລາ 7 ໂມງ ຄະນະລາວອິດສະຫຼະຈະປະກາດເອກະລາດ ແລະ ຕ້ອງຊັກທຸງຊາດລາວຂຶ້ນຍອດເສົາ ! ຊາດລາວເຮົາຈະຕ້ອງມີທຸງຊາດ ! ລາວເຮົາມີທຸງຊາດລາວແລ້ວ ! ຂ້າພະເຈົ້າແສນທີ່ຈະດີໃຈ ແລະ ປີຕິຍິນດີຈົນບໍ່ຮູ້ຈະເຮັດແນວໃດ ເພາະບໍ່ເຄີຍຄາດຝັນມາກ່ອນວ່າ ຕົນເອງຈະຮັບພາລະກິດອັນສູງສະຫງ່ານີ້. ຂ້າພະເຈົ້າ ອົດທົນ ອົດນອນ

ທຳການຕັດຫຍິບຕາມການອອກແບບຂອງນ້ອງຊາຍ ຂອງຂ້າພະເຈົ້າຄື  ທ່ານ ທຳ ໄຊຍະສິດເສນາ ໃນຄືນນັ້ນໃຫ້ແລ້ວ ຕາມກຳນົດອິດໝາຍຂອງເວລາບາທີປະຫວັດສາດນັ້ນ.

ເວລານັ້ນຂ້າພະເຈົ້າມີອາຍຸ 32 ປີ ມີຮ້ານຫຍິບຂອງຕົນເອງ 2 ຫ້ອງທີ່ກະໜົບສີຫອມ, ມີຕຶກຫ້ອງແກວທີ່ເວລານີ້ແມ່ນຫ້ອງທີ່ເປັນຮ້ານອາຫານໄຊຊະນະ, ສະໄໝນັ້ນຍັງບໍ່ມີກະໜົບຫຼວງພະບາງມີແຕ່ກະໜົບສີຫອມ  ຂ້າພະເຈົ້າຍັງໄດ້ຕັດຫຍິບເຄື່ອງນຸ່ງ, ເຄື່ອງແບບ ແລະ ໝວກໃຫ້ທະຫານລາວອິດສະຫຼະເປັນປະຈຳອີກ.

ພໍຕື່ນເຊົ້າມາຂ້າພະເຈົ້າກໍໄດ້ໄປເຕົ້າໂຮມຊຸມນຸມ ແລະ ໂຮຮ້ອງນຳບັນດາປະຊາຊົນຂ້າລາຊະການ ທະຫານ ຕຳຫຼວດ ທີ່ໜ້າຕຶກໃຫຍ່ທີ່ເປັນຫ້ອງການ ແລະ ເຮືອນພັກ ຂອງຂ້າຫຼວງປະເທດຝລັ່ງປະຈຳລາວ ( Commissaire de France au Laos ) *ຊຶ່ງແມ່ນຕຶກທີ່ເປັນຫໍພິພິດທະພັນແຫ່ງຊາດດຽວນີ້.*

ຫຼັງຈາກທີ່ທ່ານ ທຳ ໄຊຍະສິດເສນາ, ຕາງໜ້າປະຊາຊົນທັງຊາດ ແລະ ຕ່າງໜ້າລັດຖະບານລາວອິດສະຫຼະ ໄດ້ຂຶ້ນເວທີຄຽງຂ້າງມີພະຍາຄຳມ້າວ ກ່າວປະກາດເອກະລາດຕໍ່ໜ້າມະຫາຊົນລົ້ນຫຼາມຢ່າງສະຫງ່າຜ່າເຜີຍ ແລະ ອົງອາດແລ້ວ ກໍ່ຈຶ່ງໄດ້ຮູ້ແຈ້ງວ່າຊາດລາວມີເອກະລາດແລ້ວພ້ອມທັງໄດ້ສ້າງຕັ້ງລະບອບປະຊາທິປະໄຕ ພາຍໃຕ້ລັດຖະທຳມະນູນ ! ທຸງທີ່ຂ້າພະເຈົ້າຫຍິບດ້ວຍມືຂອງຕົນເອງນັ້ນ ກໍ່ໄດ້ຖືກຊັກຂຶ້ນສູ່ຍອດເສົາ  ທ່າມກາງສຽງກະທຶ່ມຂອງເພງຊາດລາວ ແລະ ທ່າມກາງຄວາມປິຕິຍິນດີ

24/VII
ຫ້າມຈຳໜ່າຍ

ຄວາມພາກພູມໃຈ ອັນສຸດແສນທີ່ຈະພັນລະນາຂອງປວງຊົນລາວ.

ມາຮອດປະຈຸບັນນີ້ ທຸງວົງເດືອນກໍຍັງດຳລົງຄົງຢູ່ນຳປວງຊົນລາວບັນດາເຜົ່າ ແລະ ຍັງປິວສະບັດນຳສາຍລົມຢູ່ທຸກເມື່ອທຸກຍາມໃຫ້ພວກເຮົາໄດ້ຊື່ນຊົມ ແລະ ໄດ້ລຳລຶກເຖິງວັນປະຫວັດສາດຂອງລາວວັນນັ້ນໃນປີ 1945. ທຸກໆມື້ນີ້ຂ້າພະເຈົ້າເອງເຫັນທຸງຍາມໃດກໍ່ພາໃຫ້ເກີດມີຄວາມສຸກໃນຈິດໃຈຢູ່ຕະຫຼອດເວລາ.

ຂ້າພະເຈົ້າຄິດໄດ້ວ່າ <u>*ອັນຊີວິດຂອງຄົນເຮົານີ້ຖ້າຜູ້ໃດໄດ້ມີໂອກາດປະກອບກິດຈະກຳພິເສດເກີນທຳມະດາແລ້ວ ຊີວິດຂອງຄົນຜູ້ນັ້ນກໍຍ່ອມສົມຄວນທີ່ຈະໄດ້ຕິດຕາມສຶກສາວິໄຈວິຈານຕື່ມອີກ.*</u>

ແມ່ເຖົ້າ ຄຳຈັນ ສຸລິຍະສັກ

ມ. ຄຳຈັນ

# ຄຳຊົມເຊີຍ

ບຸກຄົນທ່ານໃດ ມີທັງສົມບັດຜູ້ດີ ແລະ ມີທັງສົມບັດຄວາມຮູ້ຈະແມ່ນດ້ານໃດກໍ່ຕາມທີ່ຜູ້ອື່ນບໍ່ມີໄດ້ນັ້ນ ທ່ານນັ້ນນັບວ່າເປັນຊັບພະຍາກອນບຸກຄົນ ແຕ່ຖ້າວ່າຊັບພະຍາກອນນັ້ນຫາກບໍ່ໄດ້ຮັບການຂຸດຄົ້ນເອົາມາໃຊ້ໃຫ້ເປັນປະໂຫຍດແກ່ສັງຄົມແລ້ວ ຊັບພະຍາກອນນັ້ນໆກໍ່ຈະບໍ່ຕ່າງຫຍັງກັບຄຳຝັງຢູ່ໃນຕົມ ຫຼື ເຂົ້າໜົມທີ່ປະໄວ້ຢູ່ໃນຕູ້ ເຊິ່ງບໍ່ສະເພາະແຕ່ບໍ່ສາມາດໃຫ້ປະໂຫຍດໄດ້ເທົ່ານັ້ນ ແຕ່ຍັງຈະກະຈາຍຜົນລົບຂອງມັນອອກມາຕາມການເວລາດ້ວຍ.

ສ່ວນຕົວຂ້າພະເຈົ້າ ຂໍຊົມເຊີຍທ່ານຜູ້ອາວຸໂສ ທຳ ໄຊຍະສິດເສນາ ເຊິ່ງເປັນຜູ້ໜຶ່ງທີ່ມີພຽບພ້ອມຄຸນສົມບັດຕ່າງໆ ທີ່ວ່າມານັ້ນທຸກປະການ ແລະ ເຖິງວ່າອາຍຸສັງຂານຈະລ່ວງເລີຍປີທີ່ 80 ໄປພໍສົມຄວນແລ້ວກໍ່ຕາມ ແຕ່ທ່ານກໍຍັງພະຍາຍາມຖ່າຍທອດຄວາມຮູ້ທີ່ທ່ານມີເປັນຕົ້ນແມ່ນປະຫວັດຄວາມເປັນມາຂອງທຸງຊາດລາວ ເຊິ່ງໜ້ອຍຄົນຈະຮູ້ໄດ້ນັ້ນອອກມາໄວ້ເປັນສົມບັດຄວາມຮູ້ແກ່ລູກຫຼານຜູ້ເປັນຮຸ່ນສືບທອດພາລະກຳຂອງຊາດລາວເຮົາຕໍ່ໆໄປ.

25 ມິຖຸນາ 1999

ຫົວໜ້າ ສະຖາບັນຄົ້ນຄວ້າວັດທະນະທຳ
ແລະ ສັງຄົມສາດ

ຫຸມພັນ ລັດຕະນະວົງ

# ຄຳປາລົບ
# ຂອງທ່ານ ປຣິນຍາເອກ
# ເຜີຍພັນ ເຫວົ້າສີວັດທະນາ

---

ແປຈາກສະບັບພາສາຝຣັ່ງ

ສຳລັບບຸກຄົນຜູ້ໜຶ່ງຜູ້ໃດ ທີ່ສາມາດລວມກຳລັງພູ່ພວກທຳການປ່ຽນໃບໜ້າປະຫວັດສາດໄດ້ນັ້ນ ແມ່ນມີສໍລະຍານອະພິອຳນາດທີ່ຫາໄດ້ຍາກ. ຄືດັ່ງໃນປີ 1930-1945 ຜູ້ຂຽນສາມາດບັນທຶກຄວາມຈຳຂອງປະຫວັດສາດນີ້ໄວ້ໄດ້. ຫົວເລື່ອງຂອງໜັງສືເຫຼັ້ມນີ້ຄືວ່າບໍ່ມີສາລະ ແຕ່ກໍຫາກແມ່ນອະນຸສອນສຳຄັນໃຫຍ່ຍິ່ງ, ນັ້ນຄືທຸງຊາດລາວເອກລາດ. ຜູ້ຂຽນບໍ່ພຽງແຕ່ໃຫ້ຄວາມແຈ້ງກະຈ່າງອັນລ້ຳເລີດກ່ຽວກັບຂໍ້ທີ່ວ່າ " ເປັນຫຍັງ " ແລະ " ເຮັດຈັ່ງໃດ " ທຸງຊາດນີ້ຈຶ່ງມີຮູບຊົງນີ້ ແລະ ປະກອບສ່ວນຂຶ້ນດັ່ງນີ້, ທໍ່ນັ້ນ, ແຕ່ຜູ້ຂຽນຫາກ*ຍັງໄດ້ຂໍ້ມູນສຳຄັນທີ່ຍັງບໍ່ເຄີຍເປີດເຜີຍມາປະດັບໜັງສືຂອງເລົາດ້ວຍ.* ຜູ້ອ່ານຄວນພາກັນຂອບໃຈຜູ້ຂຽນທີ່ໄດ້ອຸສາຫະບໍລິການ, ຮັບໃຊ້ຂຽນໜັງສືແລ້ວຫຼາຍຫົວ. ຜູ້ຂຽນມີສິນລະປະສານປະສົມຄວາມຮູ້ອັນຍອດຍິ່ງຊານສະຫຼາດເຂົ້າກັບສຳນວນໂວຫານງ່າຍໆ ຂອງສາລະທີ່ຈະແຈ້ງ ແລະ ຈ້ອນຈັດ ແລະ ມີວິທີການຈູບຈ້າວດຶງດູດເອົາຄວາມຕິດໃຈຂອງຜູ້ອ່ານ. ຂໍໃຫ້ຜູ້ຂຽນຈົ່ງມີອາຍຸ

ຍືນຍາວມີສຸຂະພາບດີ ເພື່ອຈະໄດ້ອຸທິດຕົນຂຽນ ແລະ ພິມໜັງສື ເຫຼັ້ມໃໝ່ຕື່ມຕໍ່ໄປ.

ວັນທີ 2 ເມສາ 1999

ດຣ ເຜີຍພັນ ເຫງົ້າສີວັດທະນາ

# ໂທລະສັບໄຂຄວາມລັບ

ຂ້າພະເຈົ້າເຊື່ອວ່າຄົນລາວເຮົາສ່ວນຫຼວງຫຼາຍລ້ວນແຕ່ຮູ້ຈັກ ປູ່ - ຍ່າ ຫຼື ພໍ່ເຖົ້າ - ແມ່ເຖົ້າຂອງຕົນດີ; ແຕ່ວ່າໜ້ອຍຄົນຈະຮູ້ຈັກ ປູ່ - ຍ່າ ຂອງ ປູ່ - ຍ່າ ແລະ ພໍ່ເຖົ້າ - ແມ່ເຖົ້າ ຂອງພໍ່ເຖົ້າ - ແມ່ເຖົ້າ. ຢ່າວ່າເຖິງຊີວິດ ແລະ ຜົນງານຂອງເພິ່ນເລີຍແມ່ນແຕ່ຊື່ກໍຍັງບໍ່ຮູ້.

ນັ້ນເປັນເລື້ອງໃນຕະກຸນອັນທີ່ຍິ່ງໃຫຍ່ ແລະ ສຳຄັນກວ່ານັ້ນ ແມ່ນໃນລະດັບຊາດຈະນັບວ່າເປັນເລື້ອງທີ່ໜ້າເສົ້າສະຫຼົດຫົດຫູ່ທີ່ສຸດ, ກ້າວ່າຄົນໃນຊາດບໍ່ຮູ້ປະຫວັດສາດຂອງຊາດ, ບໍ່ຮູ້ເຜງຊາດ, ບໍ່ຮູ້ທຸງຊາດ ... *ການບໍ່ຮູ້ບັນພະບຸລຸດ ຫຼື ຕົ້ນກຳເນີດ, ບໍ່ຮູ້ປະຫວັດສາດນີ້ແຫຼະ ກໍເປັນຂໍ້ບົກພ່ອງໃຫຍ່ອັນໜຶ່ງຂອງລູກຫຼານລາວ.*

ຂ້າພະເຈົ້າເກີດ ແລະ ເຕີບໃຫຍ່ຂຶ້ນໃນເຂດຄອບຄອງຂອງຝ່າຍລັດຖະບານເກົ່າວຽງຈັນ ( ນັບແຕ່ປີ 1945- 1975 ປະເທດລາວກໍຖືກແບ່ງອອກເປັນສອງເຂດ ຄືເຂດປົດປ່ອຍຂອງຝ່າຍປະຕິວັດ ແລະ ເຂດຄອບຄອງຂອງຝ່າຍວຽງຈັນ ) ທຸງຊາດທີ່ຂ້າພະເຈົ້າຕ້ອງຢືນເຄົາລົບທຸກເຊົ້າ ແລະ ແລງໃນມື້ເຂົ້າໂຮງຮຽນ ຫຼື ແມ່ນແຕ່ເວລາເຂົ້າເບິ່ງຊີເນມາໃນໂຮງຢູ່ວຽງຈັນ ເມື່ອກາງປີ 1975 ກໍແມ່ນ **ທຸງຊ້າງສາມຫົວ**. ແຕ່ບາດຂ້າພະເຈົ້າອອກໄປເຂດປົດປ່ອຍ ( ວຽງໄຊ ) ເຂົ້າຮ່ວມເຮັດການປະຕິວັດໃນທ້າຍເດືອນກໍລະກົດ 1975

ນັ້ນ ຂ້າພະເຈົ້າຕ້ອງໄດ້ຍືນເຄົາລົບ ແລະ ປະຕິຍານຕົນຕໍ່ໜ້າ **ທຸງວິງເດືອນ** ນັບຈາກມື້ນັ້ນເປັນຕົ້ນມາ ຂ້າພະເຈົ້າກໍ່ໄດ້ຮັບຮູ້ວ່າ **ທຸງວິງເດືອນ ເປັນທຸງຊາດ** ພ້ອມກັບຮູ້ລັກສະນະ ແລະ ຄວາມໝາຍຂອງສິ່ງລໍ້າຄ່ານີ້.

ເຖິງວັນທີ 11 ຕຸລາ 1996 ຂະນະທີ່ຂຽນຕົ້ນສະບັບບົດຄວາມລໍາລຶກເຖິງວັນປະກາດເອກະລາດ 12 ຕຸລາ ຊຶ່ງຈະລົງພິມໃນຄໍລໍາ " ນາບາ ສາລະ " ຂອງ ນ.ສ.ພ ວຽງຈັນໃໝ່ກໍານົດອອກໃນວັນທີ 12 ຕຸລານັ້ນ, ຄວາມສົນໃຈກ່ຽວກັບກະແຫຼງການປະຫວັດສາດຂອງຂ້າພະເຈົ້າກໍຍິ່ງເພີ່ມທະວີຂຶ້ນດັ່ງນັ້ນໃນຕອນທ້າຍຂອງບົດຄວາມຂ້າພະເຈົ້າຈຶ່ງໄດ້ຂຽນຖາມໄປວ່າ " **ຄໍາປະກາດເອກະລາດ 12 ຕຸລາ ນັ້ນມີເນື້ອໃນແນວໃດ ? ມີໃຜຮູ້ແດ່** ".

ໃນເຊົ້າຂອງວັນຕໍ່ມາສຽງທາງໂທລະສັບພິເສດສາຍໜຶ່ງກໍຊີ້ທາງໃຫ້ຂ້າພະເຈົ້າໄປພົບກັບບຸກຄົນຜູ້ໜຶ່ງ ຊຶ່ງທ່ານຜູ້ນັ້ນໄດ້ໄຂຄວາມລັບໃຫ້ຮູ້ຢ່າງບໍ່ຄາດຄິດວ່າ : ໃຜເປັນຜູ້ແຕ່ງກະແຫຼງການປະກາດເອກະລາດ 12 ຕຸລາ, ໃຜເປັນຜູ້ອ່ານກະແຫຼງການປະຫວັດສາດນັ້ນ. **ໃຜເປັນຜູ້ປະດິດສ້າງທຸງວິງເດືອນ**, ໃຜເປັນຜູ້ຕັດຫຍິບທຸງວິງເດືອນຜືນທໍາອິດ ແລະ **ຕັດຫຍິບຢູ່ໃສ ?**

ມາເຖິງນີ້ ຂ້າພະເຈົ້າເຊື່ອວ່າປຶ້ມນ້ອຍພິເສດຫົວນີ້ກໍຈະເປັນກະແຈໄຂຄວາມລີ້ລັບໃຫ້ທ່ານຜູ້ອ່ານຮູ້ເລື່ອງລາວກ່ຽວກັບທຸງຊາດລາວວິງເດືອນໄດ້ຫຼາຍກວ່າ ທີ່ຂ້າພະເຈົ້າໄດ້ຮູ້ໃນມື້ກ່ອນນັ້ນເປັນທົບເທົ່າທະວີຄູນເພາະປຶ້ມນີ້ເກີດຈາກປາຍປາກກາ*ຂອງທ່ານ ຜູ້*

*ຊຶ່ງເປັນທັງຜູ້ແຕ່ງກະແຫຼງການປະກາດເອກະລາດ 12 ຕຸລາ ແລະ ທັງເປັນຜູ້ຜະລິດຄິດສ້າງທຸງວົງເດືອນນັ້ນດວຍ.*

ການຮັບຮູ້ປະຫວັດສາດຂອງຊາດຄວາມເປັນມາ ຂອງທຸງຊາດ ເພງຊາດຮຽນຮູ້ການເຄື່ອນໄຫວ ແລະ ຜົນງານຂອງບັນພະບຸລຸດ ຫຼື ຕົ້ນກຳເນີດຂອງຊາດຕະກຸນຕົນນັ້ນນັບວ່າເປັນຄວາມຊານສະຫຼາດ ຄວາມກະຕັນຍູຮູ້ບຸນຄຸນຂອງອະນຸຊົນຕໍ່ຊາດຕໍ່ແຜ່ນດິນຕໍ່ບັນພະບຸລຸດຜູ້ຊຶ່ງໄດ້ຕໍ່ສູ້, ສ້າງ ແລະ ປົກປັກຮັກສາມູນມໍລະດົກທັງຫຼາຍທັງປວງໄວ້ໃຫ້ພວກເຮົາ. ນີ້ເປັນໜ້າທີ່ສັກກາລະບູຊາ ຢ່າງໜຶ່ງທີ່ລູກລາວຫຼານລາວພວກເຮົາເພິ່ງກະທຳດ້ວຍຄວາມໃຝ່ໃຈ ແລະ ກະຕືລືລົ້ນ.

ວຽງຈັນ ວັນທີ 10 ກໍລະກົດ 1999

ນິວັດ ວົງສິນ



# ທຸງຊາດລາວ

ກ່ອນອື່ນ ຂໍອະນຸຍາດອະທິບາຍຄຳວ່າ ທຸງ ຄຳສັ້ນໆນີ້ກ່ອນ. ທີ່ພາກັນ ຮ້ອງວ່າທຸງນັ້ນ ແມ່ນວັດຖຸສິ່ງໜຶ່ງປະກອບມີຄັນທຳດ້ວຍໄມ້ກົມກ້ຽງຍາວພໍດີກັບສັດສ່ວນຂອງຜືນທຸງສຳລັບຄົນກື. ຄັນບາງຄັນກໍ່ສ້ວຍປາຍ, ບາງຄັນກໍ່ບໍ່ສ້ວຍ ກົມກ້ຽງສະເໝີຕົ້ນສະເໝີປາຍ -- ປາຍສຸດຂອງຄັນທຸງ ກ້າໃຫ້ງາມເຕັມຍົດ ກໍ່ມີຫອກນ້ອຍປາຍແຫຼມພອກຄຳຝັງສຸບໃສ່ແໜ້ນແກ່ນ ບໍ່ຫຼຸດອອກ ( ເພາະກ້າຈຳເປັນກໍ່ໃຊ້ຫອກນີ້ແທງສັດຕູໄດ້ ), ຕໍ່ຈາກຫອກນ້ອຍລົງມາ ມັກມີຍອຍໄໝຄຳຝັ້ນເຂົ້າກັນຜູກຣັດແໜ້ນ ມີຝອຍຍ່ອນແກວ່ງໄກວໄປມາ, ຕໍ່ຈາກນັ້ນຈຶ່ງແມ່ນ ຜືນຜ້າທີ່ເປັນຜືນທຸງແທ້. ຜືນຜ້ານີ້ມີສີສັນແຕກຕ່າງກັນຫຼາກຫຼາຍ ຕາມລັດທິສະນິຍົມຂອງແນວຄິດທີ່ເປັນມະຕິຈິດໃຈ ແນໃສ່ຈຸດປະສົງຂອງຜູ້ສ້າງ ຊຶ່ງເປັນບຸກຄົນ ຫຼື ກຸ່ມບຸກຄົນທີ່ສຳຄັນໂດດເດັ່ນ. ຄັນທຸງນີ້ມີຂະໜາດແຕ່ນ້ອຍຫາໃຫຍ່ ແຕ່ສັ້ນຫາຍາວ ຕາມແບບຂອງທຸງແຕກຕ່າງກັນໄປ. ຄັນທຸງທີ່ເປັນໄມ້ ກ້າບໍ່ມີຫອກຕໍ່ປາຍກໍ່ມັກມີໄມ້ຊຸຽນເປັນຮູບກົມມົນ ແປ ຫຼື ກົມມົນ ຍາວແຫຼມ ສວຍງາມ ເອ້ປະດັບ.ບາງທຸງຊໍ້າພັດບໍ່ມີຄັນທຸງ ມີແຕ່ຜືນທຸງກໍ່ມີ, ແຕ່ທຸງປະເພດນີ້ຕ້ອງມີເຊືອກມັດແຈສອງແຈ ເພື່ອມັດຜືນທຸງຕິດໃສ່ເຊືອກຍາວອີກເສັ້ນໜຶ່ງ ໃຊ້ຊັກທຸງຂຶ້ນສູ່ປາຍເສົາທຸງສູງ ຫຼື ຊັກທຸງລົງຈາກປາຍເສົາ. ທຸງອີກປະເພດໜຶ່ງແມ່ນບໍ່ມີເຊືອກ

ຜູກແຈດ້ວຍຊ້ຳ ມີແຕ່ຜືນທຸງລ້ອນຈ້ອນ ເພື່ອໃຫ້ນັກກິລາຈຳນວນ 8 ຄົນ ຫຼື 10 ຄົນ ໃຊ້ມືຈັບຂອບທຸງຄຶງເຄັ່ງໄວ້ໃນທ່ານອນ ເດີນສວນສະໜາມອອກໜ້າຂະບວນນັກກິລາ ...

ກ້າແມ່ນສະຖານທຳມະດາໆ ທຸງ ກໍ່ມີແຕ່ຜືນທຸງຜູກສອງແຈ ຕິດໃສ່ຄັນໄມ້ທຳມະດາກໍ່ເປັນທຸງໄດ້.

# ຄວາມເປັນມາ.

ກຸາມວ່າ : ທຸງ ( ທຸງ ຊຶ່ງບໍ່ແມ່ນທຸງຊາດ ທຸງຊໍ່ ທຸງໄຊ ) ເກີດຂຶ້ນແຕ່ປາງໃດ ? ເກີດຢູ່ແຫ່ງຫົນໃດ ? ຍັງຕອບໄດ້ຍາກ ຍັງຊອກຫຼັກຖານຂໍ້ມູນຊັດແຈ້ງມາພິສູດບໍ່ໄດ້ : ເກືອບຈະວ່າບໍ່ມີຫຼັກຖານເລີຍ.

ນັກປາດສາສະດາ ນັກສຶກສາຄົ້ນຄວ້າ ໄດ້ແຕ່ອ້າງຫຼັກຖານຈາກເອກະສານວັນນະຄະດີທາງພຸດທະສາດສະໜາຫຼາຍເລື້ອງ ຊຶ່ງຂໍເອົາມາເລົ່າສູ່ຟັງບາງເລື້ອງດັ່ງນີ້ : ໃນໜັງສືຊື່ວ່າ **<u>ເອວະເມຫຼວງ</u>** ກ່າວວ່າ : " ໃນສົງຄາມລະຫວ່າງເທບເທວາ ແລະ ອະສູນຣະກາຍນັ້ນ ພະອິນຜູ້ເປັນນາຍຂອງເທບເທວາ ຫຼື ເທວະດາທັງຫຼາຍໄດ້ບອກນັກຣົບເທວະດາທັງຫຼາຍວ່າ : ໃນເວລາອອກລົບນັ້ນ ກ້າຫາກພວກເຈົ້າສະທ້ານຢ້ານກົວ ໃຫ້ພວກເຈົ້າຈ້ອງແນມເບິ່ງປາຍທຸງຂອງເຮົາ ຜູ້ເປັນຈອມທັບ ແລ້ວພວກເຈົ້າຈະຫາຍຢ້ານ ເກີດຄວາມກ້າຫານຂຶ້ນທັນທີ ... " ອີກເລື້ອງໜຶ່ງຄືໃນໜັງສືພະເຫວດ

ສັນດອນ, ກັບນະຄອນ, ກ່າວເຖິງເລື້ອງອິງພະເຫວດສະເດັດກັບຄືນສູ່ມະຫານະຄອນ ສືບຕໍ່ສະເຫວີຍລາດສົມບັດນັ້ນກ່າວວ່າ : ສອງຟາກທາງປະດັບປະດາດ້ວຍທຸງຊໍ່ ທຸງໄຊ ທຸງທິວ ຫຼາກສີແວວວັບກວັດແກວ່ງໄປມາຕາມລົມ ...

ເມື່ອອີງເອົາວັນນະຄະດີຂອງພຸດທະສາສະໜາ ທີ່ເກີດຂຶ້ນເມື່ອ 2586 ປີກ່ອນແລ້ວ, ເລື້ອງເທວະອາສູນລະສົງຄາມ ແລະ ເລື້ອງພະເຫວດສັນດອນ ກໍ່ແມ່ນໄດ້ມີຂຶ້ນໃນເວລານັ້ນ ຫຼື ກ່ອນນັ້ນ ຄືກ່ອນ 2500-2600 ປີ ຈຶ່ງກ່າວໄດ້ວ່າ ທຸງຕ່າງໆ ໄດ້ເກີດຂຶ້ນ ແລະ ໃຊ້ຢູ່ກ່ອນ 2500 ປີ ຫຼື ຫຼາຍກວ່ານັ້ນ.

ກ້າຈະກ່າວວ່າ ທຸງມີມາກ່ອນພຸທະສັກຣາດຫ້າແສນປີ ຫຼື ໜຶ່ງລ້ານປີກໍ່ຄືງຍັງບໍ່ມີຫຼັກຖານອ້າງອີງ ແລະ ກໍ່ຈະຫາປະໂຫຍດອັນໜຶ່ງອັນໃດຍາກ ຈຶ່ງຄວນຈົບເລື້ອງນີ້ໄວ້ທໍ່ນີ້.

ທີ່ກ່າວມາ ແມ່ນອ້າງອີງຈາກເອກະສານທາງພຸດທະສາດສະໜາ, ກ້າຫາກມີເອກະສານອື່ນຈາກແຫຼ່ງອື່ນ ຫຼື ສາດສະໜາອື່ນທີ່ສາ ມາດໃຫ້ຫຼັກຖານກ່ຽວກັບທຸງຈະແຈ້ງຍິ່ງກວ່າ ຜູ້ຂຽນຂໍອະໄພນຳ ທີ່ບໍ່ສາມາດນຳມາປຽບທຽບໃນບົດຂຽນນີ້ໄດ້.

24/VII

# ທ່ານຜູ້ໃດເປັນຜູ້ເລີ້ມຕົ້ນສ້າງທຸງຂຶ້ນ ? ສ້າງເພື່ອຈຸດປະສົງອັນໃດ ?

ສະໄໝກ່ອນປາງດຶກດຳບັນ ຣາຊາມະຫາກະສັດຜູ້ເຮືອງບາມມັກເປັນວິລະຊົນ ມັກຣົບເກັ່ງກາດສາມາດ ຍົກທັບໄປບຸກຕີຍາດເອົາດິນແດນຂອງກະສັດຜູ້ອອນແອ. ມະຫາກະສັດໃຫຍ່ມັກເປັນແມ່ທັບເອງ ມີຊັ້ນເຊີງຍຸດທະວິທີສະກາດສະກັນ ທ່າທາງຫ້າວຫານເກັ່ງກ້າທ້າສັດຕູໃນການເປັນແມ່ທັບອອກໜ້ານຳພາທະຫານໂຈມຕີຂ້າຟັນສັດຕູຢ່າງກ້າຫານນັ້ນ ແມ່ທັບມີຈິດໃຈກ້າກັ່ນ. ມີປັນຍາປະດິດຄິດສ້າງສິ່ງປຸກໃຈລູກນ້ອງໃຫ້ກ້າຫານດັ່ງຕົນ ໃຫ້ລູກນ້ອງໂຍທາກ້າກັ່ນເດີນໜ້າຕ່ອຍຕີ ຍາດຊີງເອົາໄຊຊະນະໃຫ້ໄດ້. ສິ່ງປຸກໃຈນັ້ນ ຄືຄວາມເຄັ່ມໃນຊັ້ນເຊີ່ງຕີຕ່ອຍຟາດຟັນເປັນແບບຢ່າງຄວາມກ້າຫານຊານໄຊ ແລະ ສຳຄັນອີກສິ່ງໜຶ່ງຄືທຸງໄຊທີ່ບຸກໜ້າກວັດແກວ່ງລ່ວງລ້ຳຍ່ຳຍີ່ເຂົ້າສູ່ດິນແດນສັດຕູ. ເມື່ອຍຶດໄດ້ດິນແດນແລ້ວກໍ່ໃຊ້ທຸງໄຊນັ້ນປັກໝາຍເອົາດິນນັ້ນ. ຜືນທຸງທີ່ປິວສະບັດຢູ່ປາຍເສົາທຸງນັ້ນ ບອກຢ່າງອົງອາດທະນົງສັກວ່າ : " ດິນຕອນນີ້ ແມ່ນດິນຂອງຂ້າແລ້ວ ! ຫ້າມຜູ້ໜຶ່ງຜູ້ໃດລ່ວງລ້ຳເປັນເດັດຂາດ. " ດັ່ງນີ້ ຈຶ່ງອາດສາມາດກ່າວໄດ້ວ່າ : ນັ້ນແມ່ນຈຸດປະສົງຕົ້ນຕໍຂອງຜູ້ສ້າງທຸງ ຜູ້ນັ້ນຄືແມ່ທັບຜູ້ຫ້າວຫານນັ້ນເອງ. ທຸງ ກ່ອນອື່ນໝົດ, ຈຶ່ງແມ່ນຂອງຜູ້ເປັນຫົວໜ້າໃຫຍ່, ເປັນເຄື່ອງໝາຍຕົວແທນຂອງຫົວໜ້າ ; ເມື່ອປັກໝາຍໄວ້ເທິນດິນແດນທີ່ຍຶດໄດ້ນານຕໍ່ນານ ທຸງຜືນນັ້ນຈຶ່ງກາຍເປັນຄືເຈົ້າຂອງ

ແຜ່ນດິນ, ເປັນຕົວແທນຂອງແຜ່ນດິນ ; ແຜ່ນດິນຄືປະເທດຊາດ, ຈຶ່ງເປັນຕົວແທນຂອງປະເທດຊາດ ແລະ ເປັນທຸງຊາດໃນທີ່ສຸດ.

ນັ້ນຄືຄຳຕອບຂອງຄຳຖາມທີ່ວ່າ : " ເພິ່ນຜູ້ໃດເປັນຜູ້ສ້າງ ? ແລະ ສ້າງເພື່ອຈຸດປະສົງອັນໃດ ? "

ຕໍ່ຈາກນັ້ນ ການວິວັດຂອງສັງຄົມ ກໍ່ພາໃຫ້ທຸງວິວັດຂະຫຍາຍຕົວຕາມກັນ ຄືຈາກການເປັນຕົວແທນຂອງຫົວໜ້າຜູ້ຍິ່ງໃຫຍ່ຜູ້ດຽວທຸງ ກັບກາຍເປັນຕົວແທນ, ເປັນເຄື່ອງໝາຍຂອງຄົນຫຼາຍຄົນທີ່ຈັບກຸ່ມກັນເປັນໝູ່ຄະນະ ມີການຈັດຕັ້ງເປັນສຳຄັນ ເພື່ອບັນດາຈຸດປະສົງທີ່ຈະແຈ້ງ ຫຼື ປິດລັບຢ່າງໜຶ່ງຢ່າງໃດ.

ແຫຼະ, ຈາກທຸງຊາດ ຈຶ່ງເກີດທຸງສາສະໜາ ( ທຸງພຸດທະສາດສະໜາ ) ທຸງກິລາໂອແລັມປິກ, ທຸງສະຫະປະຊາຊາດ, ທຸງກິລາເຕະບານ, ທຸງຂອງສະມາຄົມ, ທຸງການຄ້າ, ທຸງເຮືອລົບ, ທຸງເຮືອຊ່ວງ ... ທຸງຊໍ່, ທຸງໄຊ, ທຸງທິວ ..., ( ຫຼານນ້ອຍຂີ່ມ້າກ້ານກ້ວຍຢູ່ເດີ່ນບ້ານກໍ່ຍັງຕິດທຸງໃສ່ຫົວມ້າກ້ານກ້ວຍ ເພື່ອໃຫ້ມ້າແລ່ນໄວ ເອົາຊະນະບຸກບືນ ) -- ທຸງໄຊສະເຫຼີມພົນ, ທຸງລູກເສືອ, ທຸງອາຊຽນ ( ASEAN Flag ), ທຸງອາຊຽນເກມສ໌ ( Asian Games Flag ).

ເມື່ອປີ 1969 ຜ່ານມານີ້ ມະນຸດຊາດສາມາດບິນຂຶ້ນສູ່ດວງຈັນໄດ້ສຳເລັດ. ໄດ້ຢຽບພື້ນດວງຈັນດ້ວຍຝາຕີນສອງຕີນເປັນຄັ້ງແລກໃນວິກີຊີວິດຂອງໂລກຈັກກະວານ. ໄດ້ໃຊ້ທຸງຂອງມະນຸດຊາດຜືນແລກປັກໝາຍລົງໄວ້ບົນພື້ນດວງຈັນເປັນຄັ້ງແລກ. ປະກາດໃຫ້ໂລກຈັກກະວານຮູ້ວ່າ : ມະນຸດໄດ້ໄຊຊະນະຢູ່ບົນດວງຈັນແລ້ວ. ນັ້ນ

ແມ່ນການຕິດພັນອັນລອຍເລີດຄັ້ງໜຶ່ງອີກ ຂອງທຸງຊາດເອົ້າໃນໄຊຊະນະຂອງການບຸກເບີກ ອັນເປັນປະຫວັດການຍອດຍິ່ງຄັ້ງແລກຂອງມະນຸດ.

## ປະເພດ, ລັກສະນະ, ຄວາມໝາຍຂອງ ທຸງ

ການວິວັດ ປ່ຽນແປງ ກ້າວໜ້າບໍ່ຢຸດຢັ້ງ ຂອງສັງຄົມມະນຸດ ພາໃຫ້ທຸກສິ່ງທຸກຢ່າງໃນໂລກທັນວຽນ ປ່ຽນໄປຕາມກັນ, ຊຶ່ງ ທຸງ ກໍ່ລວມຢູ່ໃນຂະບວນນັ້ນດ້ວຍ. ໃນນີ້ ຈະກ່າວແຕ່ເລື້ອງ ທຸງ ແລະ ຈຳເພາະແຕ່ທຸງທີ່ຄວນສຶກສາໃຫ້ຮູ້ສາລະທໍ່ນັ້ນ.

ໄດ້ກ່າວແລ້ວວ່າ ທຸງ ແມ່ນເຄື່ອງໝາຍ, ຕົວແທນໃຫ້ແກ່ຜູ້ເປັນຫົວໜ້າໃຫຍ່, ໃຫ້ແກ່ແມ່ທັບໃຫຍ່, ໃຫ້ແກ່ປະເທດຊາດ, ໃຫ້ແກ່ອົງການຈັດຕັ້ງໃຫຍ່, ໃຫ້ແກ່ໝູ່ຄະນະໃຫຍ່, ເປັນສູນລວມທາງຈິດໃຈ, ເປັນເຄື່ອງກະຕຸ້ນກະຕຸກ ປຸກປັ່ນຈິດໃຈໃຫ້ມີກຳລັງມີຊີວິດ, ມີຄວາມ ເປັນ ປຶກແຜ່ນ, ສາມັກຄີຮັກທໍ່, ມີຄວາມເປັນອັນໜຶ່ງອັນດຽວ. ມີຄວາມກ້າກັ່ນຫານຫ້າວເດັດຂາດ ດັ່ງຈະບັນລະຍາຍຕໍ່ໄປນີ້.

# ທຸງຊາດ

ທຸງຊາດ ແມ່ນເຄື່ອງໝາຍລວມສູນຂອງຊາດໆໜຶ່ງ, ມີຄວາມຍິ່ງໃຫຍ່ເທົ່າທຽມກັບຊາດໝົດທັງຊາດ, ຄູ່ຄຽງໄປກັບເພງຊາດດັ່ງຈະເຫັນໄດ້ໃນວິຖີຊີວິດເຄື່ອນໄຫວຂອງ ທຸງຊາດ ແຕ່ລະຊາດດັ່ງນີ້ :

* ເຄົາລົບທຸງຊາດ ທໍ່ກັບເຄົາລົບຊາດໝົດທັງຊາດ ຊຶ່ງມີທຸງເປັນຕົວແທນຢູ່ຕໍ່ໜ້າ.
* ລົດທຸງຊາດລົງເຄິ່ງເສົາ ແມ່ຊາດໝົດທັງຊາດ ໄວ້ທຸກໂສກເສົ້າເສຍໃຈຕໍ່ເຫດການອັນທຸກໂສກ (ຕາຍ, ມະຫັນຕະໄພ ... )
* ລົດທຸງຊາດລົງສຸດເສົາ ແລ້ວເອົາທຸງຊາດໜີໄປ ( ກໍລະນີລົດທຸງຊາດຂອງປະເທດອັງກິດຢູ່ເມືອງ ໂຮງກົງ ລົງສູ່ດິນ ແລ້ວເອົາທຸງຊາດໜີກັບຄືນສູ່ປະເທດອັງກິດ ) ບອກວ່າປະເທດອັງກິດໄດ້ໜີອອກຈາກໂຮງກົງໄປ ໂດຍບໍ່ມີອຳນາດປົກຄອງໂຮງກົງອີກ. ເວລາດຽວກັນກໍ່ຊັກທຸງຊາດຈີນຂຶ້ນສູ່ຍອດເສົາໆດຽວກັນບອກວ່າ ປະເທດຈີນ ຊາດຈີນ ມີອຳນາດອະທິປະໄຕປົກຄອງໂຮງກົງແລ້ວ.

ເອົາທຸງຊາດໆໜຶ່ງ ລົງຢຽບຢ່ຳທຳລາຍສິກຂາດ ຫຼື ເຜົາໄຟກໍ່ທໍ່ກັບດູຖູກຢຽບຢ່ຳທຳລາຍຊາດໆນັ້ນໝົດທັງຊາດ ຫຼື ເຜົາຜານດັບສູນຊາດນັ້ນໝົດທັງຊາດ.

# ປະດັບຫຼຽນໄຊຫຸ່ງໄຊສະເຫຼີມພົນ

ປະເພນີປະດັບຫຼຽນໄຊ (ຫຼຽນກ້າຫານ) ໃຫ້ແກ່ກອງພັນທະຫານ (ກອງພົນທະຫານບົກ, ກອງພົນທະຫານນ້ຳ, ກອງພົນທະຫານອາກາດ, ກອງພົນລົດກົງ ----) ທີ່ຊະນະສົງຄາມເດັດຂາດງົດງາມ ແມ່ນພິທີປະດັບຫຼຽນໄຊດັ່ງກ່າວໃຫ້ແກ່ ທຸງໄຊສະເຫຼີມພົນຂອງກອງພົນນັ້ນ ຊຶ່ງເຄີຍປະຕິບັດເປັນປະເພນີດັ່ງນີ້ :

ຢູ່ບົນລານສະໜາມກວ້າງໃຫຍ່ສະອາດຕາ, ກອງພົນທະຫານທີ່ກ່າວ, ປະກອບດ້ວຍທະຫານແຕ່ງຕົວເຕັມຍົດ, ຕິດອາວຸດຄົບຈຳນວນຫ້າກອງພັນ, ບາງທີມີກອງພົນອື່ນເຂົ້າລວມພິທີນຳກັນ, ຈັດຕັ້ງແຖວທະຫານເປັນລະບຽບລຽບລ້ອຍງົດງາມຕໍ່ໜ້າຜາມໄຊ, ບ່ອນທີ່ຄະນະປະທານພິທີ ( ປະທານປະເທດ, ຫຼື ເຈົ້າມະຫາຊີວິດ, ຫຼື ນາຍພົນຜູ້ບັນຊາການທະຫານສູງສຸດ - - - ) ນັ່ງປະຈຳພ້ອມດ້ວຍແຂກທີ່ກຶກເຊີນ. ທຸກຄົນ ( ທັງທະຫານ ແລະ ພົນລະເຮືອນ ) ແຕ່ງຕົວເຕັມຍົດສະອາດງາມ ຕິດຫຼຽນກາຄຳຊອບທ້ອຍເອິກ.

ຄັນໄດ້ເວລາ ຜູ້ບັນຊາການກອງພົນໃນເວລານັ້ນ ກໍ່ເປັ່ງສຽງບັນຊາ : " ລຽບວຸດ ວັນທາວຸດ (ເຄົາລົບທຸງຊາດ). ທັນໃດນັ້ນ ກອງດຸຣິຍາ, ບັນເລງເພງຊາດ. ທຸງໄຊສະເຫຼີມພົນທີ່ຢູ່ຕໍ່ໜ້າຜາມໄຊກໍ່ຄ່ອຍໆລົດລົງທຸງກົ້ມຕ່ຳລົງ. ທຸກຄົນໃນສະຖານທີ່ນັ້ນລຸກຢືນຂຶ້ນສະແດງຄວາມເຄົາລົບ.

ເພງຊາດຈົບລົງ, ຜູ້ເປັນປະທານໃນພິທີຍ່າງເດີນໄປຫາທຸງໄຊ

ສະເຫຼີມພົນ ຕິດຕາມດ້ວຍຜູ້ກືອັນເງິນບັນຈຸຫຼຽນກ້າຫານ. ຄັນຮອດສະຖານທີ່ຕໍ່ໜ້າທຸງໄຊສະເຫຼີມພົນ, ປະທານເຄົາລົບທຸງແລ້ວຈັບເອົາຫຼຽນໄຊຢູ່ໃນອັນເງິນ ຄັດຕິດປະດັບໃສ່ຜືນທຸງເບື້ອງບົນ.

ທຸງໄຊສະເຫຼີມພົນຜືນນັ້ນທຳດ້ວຍຜ້າໄໝ, ມີຍອຍໄໝຄຳຫຍິບຕິດຂອບສາມດ້ານງົດງາມຍິບຍັບ, ມີເຊືອກສາຍເປັນໄໝຄຳຝັ້ນມັດຄໍຄັນທຸງປ່ອຍສົ້ນຫ້ອຍຕ່ອງແຕ່ງໄປມາ.

ນາຍທະຫານຍົດນາຍຮ້ອຍເອກ ຫຼື ນາຍພັນ ຈຳນວນສາມຄົນ ຈັດແຖວສາມ ຜູ້ຢູ່ກາງແຖວມີໜ້າທີ່ກືທຸງໄຊສະເຫຼີມພົນ.

ຄັນແລ້ວ ສຽງເພງສະເຫຼີມບາລະມີກໍດັງຂຶ້ນ ແລະ ຈົບລົງ. ສຽງບັນຊາບອກ : "ລຽບວຸດ - ຈັດແຖວກຽມເດີນສວນສະໜາມ".

ນັ້ນແມ່ນວິກີຊີວິດການເຄື່ອນໄຫວອັນສຳຄັນຍິ່ງໃຫຍ່ຕອນໜຶ່ງຂອງທຸງໄຊສະເຫຼີມພົນ.

ແຕ່ລະຊາດໃນໂລກມີທຸງຊາດຂອງຕົນແຕກຕ່າງກັນໄປ ຕາມທັດສະນະຄະຕິຂອງຊາດນັ້ນ ໃນຂໍ້ນີ້ ຂໍບໍ່ບັນລະຍາຍລັກສະນະຂອງທຸງຊາດເຫຼົ່ານັ້ນ ທຸກຊາດເພາະຈະຍາວໂພດ.

## ທຸງ ພຸດທະສາດສະໜາ

ພຸດທະສາດສະໜາ ເປັນສາດສະໜາໃຫຍ່ສາດສະໜາໜຶ່ງໃນໂລກ ຈຶ່ງມີທຸງປະຈຳສາດສະໜາ ມີເອກະລັກພິເສດຂອງຕົນຄື ປະກອບດ້ວຍສີ 7 ສີຂອງຮຸ້ງກິນນ້ຳ.

ອົງພະພຸດທະເຈົ້າ ມີອິດທິຣິດ ຣັດສະໝີ ຣັງສີ ສະແດງອອກ ອ້ອມພະວໍລະກາຍຂອງພະອົງ ຄືດັ່ງດຽວກັບສີຂອງຮຸ້ງກິນນ້ຳ 7 ສີ. ແຕ່ພວກຊ່າງແຕ້ມ ມັກແຕ້ມຣັງສີ 7 ສີ ອ້ອມແຕ່ຈຳເພາະພະສຽນ (ຫົວ) ຂອງພະອົງທ່ານັ້ນ. ຣັງສີ 7 ສີມີຄື : ຟ້າ, ຂຽວ, ຂຽວອ່ອນ, ເຫຼືອງ, ຂາວ, ແດງ, ສົ້ມ (ເຫຼືອງແກ່).

ແຕ່ການຕັດຫຍິບຜ້າສີ 7 ສີເຮັດທຸງໃຫ້ໄດ້ຮູບດຽວ ສີດຽວກັບຮຸ້ງກິນນ້ຳນັ້ນ ເປັນສິ່ງທຳໄດ້ຍາກ ; ຈຶ່ງຈ້ອນຕັດຜ້າ 7 ສີເປັນຕ່ອນໆ ແລ້ວຫຍິບຕິດກັນຕາມລາຍຕັ້ງ 5 ສີ, ຕາມລາຍນອນ 5 ສີ ເປັນແຖບນ້ອຍຕໍ່ປາຍທຸງ. ທຸງ ທີ່ວ່ານີ້ ນັກປາດຣາຊະບັນດິດຊາວພຸດ ໄດ້ປະດິດສ້າງຂຶ້ນຢູ່ປະເທດ ສີລັງກາ ຊຶ່ງເປັນປະເທດທີ່ພຸດທະສາດສະໜາຍັງບໍລິສຸດປອດໃສ ມີຕົ້ນສີມະຫາໂພເກີດ ແລະ ມີແຂ້ວມະແງເຫຼັ້ມແທ້ດັ້ງເດີມຂອງພະພຸດທະອົງ ສະຖິດສະຖຽນຢູ່ນະເມືອງ ແຄນດີນະຄອນ. ເມື່ອປະດິດສ້າງແລ້ວ ຊາວພຸດທັງໂລກ ກໍ່ນັບຖືສັນລະເສີນເອົາເປັນທຸງພຸດທະສາດສະໜາທົ່ວໂລກ. ສະແດງຄວາມເປັນປຶກແຜ່ນແໜ້ນໜາໝັ້ນຄົງຂອງພຸດທະສາດສະໜາໃນທົ່ວໂລກ ພາຍໃນທຸງຜືນດຽວກັນ.

# ທຸງ ສະຫະປະຊາຊາດ

ອົງການສະຫະປະຊາຊາດ ແມ່ນອົງການຈັດຕັ້ງ ອັນໃຫຍ່ທີ່ສຸດຂອງມວນມະນຸດໃນໂລກ ມີລະບົບການບໍລິຫານຄຸ້ມຄອງ ເປັນແບບຢ່າງຂອງລະບອບການປົກຄອງແບບເສລີປະຊາທິປະໄຕອັນຢັ້ງມຍອດ ຊຶ່ງມີຊາດເກືອບທຸກຊາດ ໃນໂລກເປັນສະມາຊິກ, ຢູ່ພາຍໃຕ້ທຳມະນູນສານຊຶ່ງຮ້ອງວ່າ ກົດບັດສະຫະປະຊາຊາດ. ຈິດໃຈພື້ນການ ແລະ ເປົ້າໝາຍໃຫຍ່ຍິ່ງຂອງອົງການນີ້ ແມ່ນສັນຕິພາບໂລກ, ຄວາມສະຫງົບປອດໄພ, ສິດທິມະນຸດ, ການກິນອີ່ມນຸ່ງອຸ່ນຂອງພົນລະໂລກ, ການສຶກສາ, ການຮ່ວມມື, ການສຸກຂະອານາໄມ, ສະພາບແວດລ້ອມ .... ຢູ່ຕໍ່ໜ້າຂອງອາຄານທີ່ຕັ້ງຂອງອົງການສະຫະປະຊາຊາດ ທີ່ນະຄອນ ນິວຢອກ ( ໃນສະຫະລັດ ອະເມລິກາ ) ມີທຸງຊາດຂອງແຕ່ລະຊາດສະມາຊິກຕັ້ງລຽນລາຍເປັນແຖວຕໍ່ກັນຄົບທຸກຊາດ ; ເພື່ອສະແດງຄວາມເປັນຕົວຕົນອັນແໜ້ນໜາໝັ້ນຄົງໃນການບໍລິຫານນຳພາ, ສະມາຊິກຂອງອົງການນີ້ ໄດ້ປະດິດສ້າງທຸງຂຶ້ນຜືນໜຶ່ງໃຫ້ຊື່ວ່າ : " ທຸງສະຫະປະຊາຊາດ " ເປັນຜືນຜ້າສີຟ້າອອນຂະໜາດໃຫຍ່ສົມຄວນ, ຢູ່ກາງມີຮູບແຕ້ມແຜນທີ່ໂລກລວມ 5 ທະວີບ, ມີສອງກິ່ງໃບໄມ້ ໄຂວ່ກັນໂຄ້ງອ້ອມຊູຂຶ້ນສອງຂ້າງຂວາຊ້າຍ ໃຫ້ແຜນທີ່ໂລກຢູ່ກາງ, ທຸງສະຫະປະຊາຊາດຜືນນີ້ ມີເສົາທຸງສູງກວ່າເສົາທຸງຊາດສະມາຊິກ, ຕັ້ງຢູ່ກາງ ແລະ ຕໍ່ໜ້າ. ທຸງສະຫະ

ປະຊາຊາດ ຍັງຕັ້ງຢາຍຢູ່ຕໍ່ໜ້າອາຄານທີ່ທໍາການອົງການສະຫະ
ປະຊາຊາດຂອງທຸກປະເທດສະມາຊິກ.

## ທຸງກິລາໂອແລມປິກ

ດັ່ງຄຽວກັບອົງການສະຫະປະຊາຊາດ: ອົງການກິລາໂອແລມປິກ, ກໍ່ມີທຸງປະຈໍາຂອງຕົນໃຫ້ຊື່ວ່າ : ທຸງ ກິລາໂອແລມປິກ.

ກິລາໂອແລມປິກ ມີມາແຕ່ສະໄໝດຶກດໍາບັນທີ່ປະເທດ ກຣີກ (ແຖບທະເລເມດີແຕຣາເນຕະວັນອອກ) ຢູ່ທີ່ເມືອງໂອລິມປີ. ແຕ່ເດີມ ມີກິລາໂອແລມປິກຢູ່ແຕ່ພາຍໃນປະເທດ ກຣີກ, ຕໍ່ມາໄດ້ຂະຫຍາຍຕົວກວ້າງອອກສູ່ໂລກ ຈົນເປັນອົງການກິລາລະດັບໂລກ. ຈິດໃຈມຸ້ງໝາຍຂອງກິລາໂອແລມປິກ ແມ່ນເພື່ອປູກຝັງຈິດໃຈໃຫ້ຮັກກິລາ, ເອົາກິລາເປັນແມ່ແຮງ ສ້າງພະລະກໍາລັງທາງກາຍໃຫ້ເກີດພະລັງຕໍ່ສູ້ຕ້ານທານ ແຂງແກ່ນຕ້ານຕໍ່ໂລຄາພະຍາດພາຍນອກ ເປັນຢາປົວພະຍາດ ກັນພະຍາດ ເກີດປະໂຫຍດດ້ານສາທາລະນະສຸກ ; ຮັກກິລາ ຈົນເອົາກິລາເປັນເງື່ອນໄຂແຂ່ງຂັນຊວງຊີງເອົາແພ້ເອົາຊະນະເອົາຊະນະເລີດ, ຊະນະໂລກ ( ແຊ້ມໂລກ ) ; ປູກຝັງຈິດໃຈໃຫ້ມີຈິດໃຈເປັນນັກກິລາ, ຮູ້ເສຍ, ຮູ້ຊະນະ ບໍ່ມີຈິດໃຈອາຄາດເປັນສັດຕູ, ຮູ້ຂໍໂທດ, ຮູ້ໃຫ້ອະໄພ, ຮູ້ຜູກມິດສາມັກຄີ, ຮູ້ສ້າງສັງຄົມກວ້າງໄກ ຮູ້ສ້າງຍຸດຕິທໍາຮັກຫໍ່ ... ເພື່ອໃຫ້ໄດ້ຄວາມໝາຍທີ່ກ່າວ ຄະນະຜູ້ບໍາລິເລີ່ມຈຶ່ງເລືອກເອົາຮູບວົງກົມ ( ກົງລໍ້ ) 5 ກົງ ກ່ຽວກອດສານເຂົ້າກັນເປັນຮູບ

ເຄື່ອງວົງກົມ ວາງໄວ້ບົນຜືນຜ້າສີຟ້າອ່ອນຜືນໃຫຍ່ຜືນໜຶ່ງ -- ເປັນທຸງໂອແລມປິກໃຊ້ກັນຕະຫຼອດທຸກວັນນີ້ -- ເປັນເຄື່ອງໝາຍຕົວແທນຂອງອົງການກິລາຍິ່ງໃຫຍ່ຂອງໂລກ, ຊີ້ສະແດງວ່າເປັນອົງການມີຕົວຕົນ ມີລະບຽບການຈັດຕັ້ງ, ມີທຳມະນູນ, ເຂັ້ມງວດຜູກມັດໃນການບໍລິຫານຄຸ້ມຄອງການກິລາຂອງໂລກໃຫ້ໝັ້ນຄົງມີວິໃນ, ມີລະບຽບການເຫຼັ້ມ, ມີຄວາມເປັນທຳເກີດຜົນແທ້ຈິງ.

ໃນປະຈຸບັນໃນຂົງເຂດທ້ອງກິ່ນເອຊຽນ ເກີດມີທຸງກິລາເອຊຽນເກມຕາມຕິດມາ ເພື່ອຂະຫຍາຍການກິລາໃຫ້ຜັນແຜ່ກວ້າງຂວາງເລີ່ງເລື້ອຍທະວີຄູນທຸກປີ. ທຸງກິລາເອຊຽນເກມ ປະກອບມີຮູບດວງພະອາທິດສີແດງກຳລັງເປັ່ງແປວໄຟເປັນລັດສະໝີຍາວ ສ້ອຍແຫຼມຢູ່ກາງຜືນຜ້າສີຂາວ ຢູ່ດ້ານໃຕ້ມີຮູບວົງກົມສີ ຈຳນວນ 11 ວົງກ້ຽວກອດສານເຂົ້າກັນເປັນຮູບໂຄ້ງ. ທີ່ກ່າວມານັ້ນ ແມ່ນທຸງໃຫຍ່ລະດັບສຳຄັນທີ່ຜູ້ສົນໃຈຄວນຮູ້ ສຶກສາໃຫ້ລະອຽດ. ແນ່ນອນທີ່ຂຽນມານັ້ນຍັງບໍ່ລະອຽດຄົບກ້ວນສົມບູນ ຊຶ່ງຜູ້ຂຽນຂໍອະໄພມາພ້ອມນີ້.

ນອກຈາກທຸງທີ່ກ່າວມາແລ້ວ ຍັງມີທຸງອີກຫຼາຍໆຊະນິດ ເຊັ່ນ : ທຸງໄຊສະເຫຼີມພົນ ( ທຸງທະຫານປະຈຳກອງພົນ ), ທຸງທິວ, ທຸງຊໍ່, ທຸງໄຊ, ທຸງເຮືອ, ທຸງການຄ້າ ແລະ ຕໍ່ໆໄປ. ເວລາຕີມວຍຊີງແຊ້ມໂລກ ກ່ອນຈະລົງມືຕີກັນ ແຕ່ລະຝ່າຍໄດ້ເອົາທຸງຊາດຂອງຕົນໄປເຄົາລົບ ດ້ວຍການຮ້ອງເພງຊາດແລ້ວຈຶ່ງລົງມືຕີກັນ -- ຄັນຝ່າຍໃດຊະນະ ກໍ່ຟ້າວເອົາທຸງຊາດຂອງຕົນຂຶ້ນສູ່ເວທີກວັດແກວ່ງໄປມາເປັ່ງສຽງຮ້ອງໄຊໂຍດີອົກດີໃຈ, ສະແດງວ່າຊາດຕົນຊະນະໄດ້ກຽດຊື່ສຽງໂດ່ງດັງ.

# ກຳເນີດ ທຸງ ຊາດລາວ

ຊາດລາວ ເຄີຍເປັນຊາດໃຫຍ່ຊາດໜຶ່ງ ໃນທະວີບເອເຊຍຕາເວັນອອກສ່ຽງໃຕ້, ມີພາສາ, ມີໜັງສື, ມີອັກສອນສາດວັນນະຄະດີ, ມີປະຫວັດຮຸ່ງເຮືອງເລື່ອງລື, ມີໄຊຊະນະຍິ່ງໃຫຍ່ໃນຍຸດທະສົງຄາມ, ມີວັດທະນະທຳ, ຮີດຄອງປະເພນີ, ມີການນຸ່ງຖືເປັນເອກະລັກຂອງຕົນ, ມີສາດສະໜາ, ມີສະຖາປັດຕະຍະກຳສິລະປະດົນຕີເດັ່ນຊັດ ມີເກືອບທຸກຢ່າງບໍ່ນ້ອຍໜ້າ ຕ່ຳຕາຊາດອື່ນ.

ແຕ່ຍັງມີເລື້ອງໜຶ່ງທີ່ພິຈາລະນາກັນບໍ່ແລ້ວ, ບໍ່ໄດ້ຂໍ້ມູນລະອຽດພໍທີ່ຈະເຊື່ອຖືໄດ້ ຄືບັນຫາທຸງຊາດລາວໃນອະດີດຕະການ. ເຄີຍມີທຸງຊາດລາວແລ້ວບໍ ? ຖ້າມີແທ້ມີຕົວຢ່າງບໍ່ ? ມີໃນສະໄໝໃດ ? ຄຳຕອບຍັງເລື່ອນລາງບໍ່ຢັ້ງຢືນໄດ້ຈະແຈ້ງ.

ລອງກອຍຫຼັງຄືນໄປຄົ້ນຄວ້າສຶກສາ ໃນສະໄໝກ່ອນພະເຈົ້າຂຸນບູລົມລາຊາທິຣາຊ. ໜັງສືພົງສາວະດານລາວອ້າງຕາມຈົດໝາຍເຫດຈີນບັນທຶກໄວ້ວ່າ : " ມະຫາກະສັດລາວກໍ່ດີ ພະລາຊະຊົນນະນີກໍ່ດີ, ອົງມະເຫສີກໍ່ດີ ຕະຫຼອດຮອດພະລາຊະໂອລົດ ເວລາສະເດັດໄປທາງໃດ ມີທຸງສີແດງ ສີເຫຼືອງ ສີຂາວ ແອບຂ້າງຊ້າຍຂວາຂ້າງລະ 4 ທຸງ. ມີວິຍົນໄກ່ສອງວິພັດຊ້າຍຂວາ, ມີທຸງຍົນສັດ, ມີຂວານດ້າມຍາວ, ມີຮົ່ມຍົນນົກສີແດງແກມເຫຼືອງກັ້ງ ". ນັ້ນແມ່ນໃນສະໄໝໜອງແສ ສະແດງວ່າມີທຸງໃຊ້ແລ້ວ ຈະແມ່ນທຸງຊາດ ຫຼືແນວໃດບໍ່ໄດ້ກ່າວໄວ້. ຕໍ່ຈາກນັ້ນແມ່ນສະໄໝພະເຈົ້າຂຸນບູລົມລາ

ຊາທິລາດສືບຕໍ່ຮອດພະເຈົ້າຟ້າງຸ່ມ ມະຫາລາດ ພະເຈົ້າໄຊເຊດຖາທິລາດ, ພະເຈົ້າສຸລິຍະວົງສາ, ຍັງຊອກຫາຫຼັກຖານພິສູດຊີ້ວ່າລາວມີທຸງຊາດແລ້ວ ຫຼື ຍັງບໍ່ທັນໄດ້.

ອາໄສຄວາມເປັນປຶກແຜ່ນແໜ້ນໜາ ຄວາມກວ້າງໃຫຍ່ໄພສານຂອງແຜ່ນດິນລາວ ຄວາມຮຸ່ງເຮືອງແກ່ນກ້າຫ້າວຫານຂອງວິລະມະຫາກະສັດ ຜູ້ເປັນແມ່ທັບໃຫຍ່, ຜາບແພ້ສັດຕູໝູ່ມານທົ່ວທຸກສາລະທິດໃນປາງນັ້ນມາແລ້ວ, ປະເທດລາວຄວນມີທຸງຊາດປະດັບຊາດແລ້ວແຕ່ເວລານັ້ນເປັນຕົ້ນມາ. ຫຼັກຖານທາງພຸດທະສາດສະໜາໄດ້ຢັ້ງຢືນໃນເວລາກ່ອນນັ້ນດ້ວຍຊ້ຳວ່າ ມີທຸງໃຊ້ກັນແລ້ວທົ່ວໄປ. ຄວນເປັນໄປໄດ້ວ່າລາວພ້າຈະດົ້ນລົນຊອກປະດິດສ້າງທຸງຊາດຂຶ້ນໃຊ້ເປັນກຽດສັກສີຂອງຊາດ ດັ່ງດຽວກັບຊາດອື່ນທີ່ເຂັ້ມແຂງໃນລະດັບດຽວກັນເຊັ່ນປະເທດໃນຢູລົບ. ແຕ່ບໍ່ມີເອກະສານຫຼັກຖານໃດພິສູດຢືນຢັນ.

ອາດເປັນໄປໄດ້ວ່າ ທຸງຊາດລາວນັ້ນມີແລ້ວ, ເຄີຍໂບກສະບັດກວັດແກວ່ງຢູ່ບົນແຜ່ນດິນລາວແລ້ວ ມີທັງເອກະສານຫຼັກຖານບັນລະຍາຍອະທິບາຍຮູບລັກສະນະຂອງທຸງນັ້ນຄົບກ້ວນບໍລິບູນ, ແຕ່ຫາກວ່າກຶກສັດຕູໝູ່ມານທຳລາຍລ້າງຜານຈົນຮາບກ້ຽງ, ບໍ່ເຫຼືອຮອງຮອຍໃດໆເລີຍ. ທັງນີ້ ກໍ່ເພາະວ່າ ສັດຕູຍົກທັບເຂົ້າຕີປຸ້ນສະດົມນະຄອນວຽງຈັນເມື່ອປີ ຄສ.1826-28 ນັ້ນ,ແມ່ທັບຝ່າຍສັດຕູໄດ້ສັ່ງບັນຊາສຽບຂາດວ່າ : " ໃຫ້ທຳລາຍເຜົາຜານດັບສູນວຽງຈັນໃຫ້ຮາບກ້ຽງ ໃຫ້ເຫຼືອແຕ່ດິນກັບນ້ຳ ". ທະຫານສັດຕູກໍ່ໄດ້ກະທຳການປຸ້ນສະ

ດິນຈູດເຜົາວຽງຈັນຈົນເຫຼືອແຕ່ດິນກັບນ້ຳຕາມຄຳສັ່ງບັນຊາແທ້ຈິງຈັງ. ສ່ວນປະຊາຊົນກໍ່ຖືກຈັບກຸມເປັນຊະເລີຍ ຖືກບັງຄັບອົບພະຍົບເທິງກວາດຕ້ອນໃຫ້ໜີຈາກບ້ານເກີດເມືອງນອນຈົນໝົດກ້ຽງ -- ບໍ່ເຫຼືອຈັກຄົນ -- ຈົນວຽງຈັນຮ້າງເປັນໂພນດິນຈີ່ດິນຈໍ່ ຢູ່ມາຈົນຮອດ 115 ກວ່າປີ, ມີຮອດເສືອ, ຊ້າງ, ສັດປ່າທັງຫຼາຍເຂົ້າມາຢູ່ໃນກາງກຸງວຽງຈັນ ... ເມື່ອເປັນເຊັ່ນນັ້ນ ກໍ່ຈຶ່ງບໍ່ມີອັນໃດເຫຼືອໄວ້ພິສູດວ່າ ປະເທດລາວມີທຸງຊາດລາວແລ້ວຫຼືຍັງ. ຂອດນີ້ຂໍຝາກໄວ້ພິຈາລະນາສຶກສາຄົ້ນຄວ້າໃຫ້ໄດ້ຂໍ້ມູນຕໍ່ໄປ ...

ຫຼືຈະເຂົ້າໃຈວ່າ ລາວຕັ້ງບໍ່ມີທຸງຊາດລາວມາແຕ່ໃດໆ ? ຂອດນີ້ຍິ່ງບໍ່ເປັນຕາເຊື່ອຖື ໂດຍສະເພາະຢ່າງຍິ່ງກໍ່ແມ່ນໃນສະໄໝພະເຈົ້າໄຊເຊດຖາມະຫາລາດຄອງລາຊະສົມບັດນັ້ນ ຄວາມຮຸ່ງເຮືອງເຫຼືອງເຫຼື້ອມຂອງລາວແມ່ນສູງເດັ່ນ, ຢູ່ໃນລະດັບທີ່ຕ້ອງມີທຸງຊາດລາວແລ້ວ. ອີກປະການໜຶ່ງສະໄໝກະສັດລາວເປິງນັ້ນ ກໍແມ່ນກົງກັນພໍດີກັບສະໄໝຂອງກະສັດພະເຈົ້າຫຼຸຍທີ 14 ຂອງປະເທດຝຣັ່ງເສດ (ຊຶ່ງມີການຕິດຕໍ່ພົວພັນສັນກະວະໄມຕີຕໍ່ກັນ ...) ລວມທັງສະໄໝຂອງກະສັດຂອງປະເທດໂຮນລັງດ້ວຍ (ສະໄໝ ວັນ ວຸດສະຕອບເຟີມາຢ້ຽມຢາມກະສັດລາວ (ເຈົ້າສຸຣິຍະວົງສາ) ... ທັງສອງປະເທດນີ້ (ຝຣັ່ງ ແລະ ໂຮນລັງ) ຕ່າງກໍ່ມີທຸງຊາດຂອງຕົນເປັນແບບຢ່າງໃຫ້ລາວແລ້ວ. ການສູນເສຍວຽງຈັນຄັ້ງນັ້ນ ຈຶ່ງແມ່ນການສູນເສຍຄັ້ງຍິ່ງໃຫຍ່ທີ່ສຸດໃນປະຫວັດສາດຂອງຊາດລາວ ຈົນເຫຼືອແຕ່ນ້ຳກັບດິນ ... ມັນແມ່ນການດັບສູນເຊື້ອຊາດແສນສາຫັດຮ້າຍກາດ,

ແມ່ນແຕ່ທຸງຊາດ ຫຼື ຮ່ອງຮອຍຂອງທຸງຊາດກໍ່ບໍ່ເຫຼືອໄວ້. ກົກໄໝ້ເຜົາຜານວອດວາຍຈົບຫາຍໝົດກ້ຽງ.

ຮອດປີ ຄ.ສ. 1893 ຝຣັ່ງເສດໃຊ້ອຳນາດເຮືອປືນໃຫຍ່ເປັນການທູດ ເພື່ອເຂົ້າມາປົກຄອງວຽງຈັນໃຫ້ຢູ່ໃນອາຣັກຂາແລະເຊີດຊູໂອບອ້ອມຍົກຍໍເອົາເຈົ້າສັກກະຣິນ ແລະ ເຈົ້າສີສະຫວ່າງວົງຂຶ້ນສະເຫວີຍລາດ ເປັນເຈົ້າມະຫາຊີວິດຕາມລຳດັບ ຫຼຸດພົ້ນອອກຈາກເປັນຫົວເມືອງຂຶ້ນຂອງໄທ ມາເປັນຫົວເມືອງຂຶ້ນຂອງຝຣັ່ງ. ເວລານັ້ນ ໄດ້ມີທຸງຊ້າງສາມຫົວຢູ່ຫຼວງພະບາງກ່ອນແລ້ວ. ທຸງນັ້ນເປັນຫຼັກການຊີ້ວ່າ ອານາຈັກຫຼວງພະບາງເປັນຫົວເມືອງຂຶ້ນຂອງສະຫຍາມ ນັບແຕ່ອານາຈັກວຽງຈັນໄດ້ເສຍແກ່ສະຫຍາມເປັນເວລາ 155 ກວ່າປີ. ອານາຈັກວຽງຈັນ ແລະ ອານາຈັກຈຳປາສັກ ບໍ່ໃຊ້ທຸງຊ້າງສາມຫົວເພາະຈິດໃຈນັ້ນຍັງບໍ່ຍອມຈຳນົນ ... ຈິດໃຈຍັງທະນົງອົງອາດ, ບໍ່ສາມາດອົດທົນຕໍ່ຄວາມທຸກທໍລະມານຕໍ່ການກົດຂີ່ຂົ່ມເຫັງ ດູຖູກຢຽບຢໍ່າແສນແສບຂອງຄົນລາວ ທີ່ຕົກເປັນຊະເລີຍເສິກ ເປັນຂ້ອຍຂ້າຈຶ່ງຍົກທັບໄປບຸກໂຈມຕີກູ້ກຽດ, ກູ້ເອກະລາດ ປົດປ່ອຍຊາດໃຫ້ຄົນລາວພົ້ນທຸກຂາເວດທະນາ.

ຮອດນີ້ ຄວນພິຈາລະນາກອຍຫຼັງ ເພື່ອຮູ້ເຫັນສະພາບເປັນຈິງຂອງແຜ່ນດິນລາວ. ຫຼັງຈາກເສຍໄຊຢ່າງເຈັບແສບໃຫ້ແກ່ສະຫຍາມແລ້ວ, ສະຫຍາມກໍ່ມີອຳນາດປົກຄອງລາວ ແບ່ງລາວເປັນສາມພາກຄື ຫຼວງພະບາງ, ວຽງຈັນ, ຈຳປາສັກ, ຕາມທິດສະດີແບ່ງແຍກເພື່ອປົກຄອງ.

ຄັ້ນຝຣັ່ງເຂົ້າມາ ກໍ່ໃຊ້ກົນລະຍຸດເລິກແລບລີ້ລັບສານການທະຫານເຂົ້າກັບການເມືອງ ຍຶດຄອງຫຼວງພະບາງໂດຍສັນຕິ. ເຫັນປະເທດລາວຖືກແບ່ງເປັນສາມພາກຢູ່ແລ້ວ ກໍ່ສືບຕໍ່ລັດທິ " ແບ່ງແຍກເພື່ອປົກຄອງ " ຕໍ່ໂດຍງ່າຍດາຍ, ຕັ້ງຫຼວງພະບາງເປັນ ພະລາຊະອານາຈັກຫຼວງພະບາງ ມີພະເຈົ້າສີສະຫວ່າງວົງເປັນກະສັດຄອງລາຊະສົມບັດ ໃນຮູບເປັນລັດຢູ່ພາຍໃຕ້ອາຣັກຂາຂອງຝຣັ່ງ ( Protectorat ), ສ່ວນວຽງຈັນ ແລະ ຈຳປາສັກນັ້ນເປັນເມືອງຂຶ້ນໂດຍກົງຂອງຝຣັ່ງ ( Colonies ) ດັ່ງດຽວກັບຢູ່ເມືອງຫວຽດນາມ ຝຣັ່ງກໍໄດ້ແບ່ງເປັນສາມພາກຄື : ຕົງແກັງ, ອານາມແລະໂກແຊັງຊີນ ຮຽບຮ້ອຍກ່ອນແລ້ວ. ຢູ່ຫຼວງພະບາງມີທຸງຊ້າງສາມຫົວໃຊ້ປະຈຳຢູ່ກ່ອນແລ້ວ ຝຣັ່ງກໍ່ປ່ອຍໃຫ້ເຈົ້າມະຫາຊີວິດ ໃຊ້ຕໍ່ໄປຄູ່ຄຽງກັບທຸງຊາດຝຣັ່ງ -- ມີທັງທຸງຝຣັ່ງຢູ່ຂວາ ແລະ ທຸງຊ້າງສາມຫົວຢູ່ຊ້າຍ. ສ່ວນຢູ່ວຽງຈັນ ແລະ ຈຳປາສັກມີແຕ່ທຸງຊາດຝຣັ່ງທຸງດຽວ, ບໍ່ມີທຸງຊ້າງສາມຫົວ. ທີ່ບໍ່ມີທຸງຊ້າງສາມຫົວແມ່ນບໍ່ມີມາແຕ່ໃດໆກອຍໄປຮອດສະໄໝວຽງຈັນແຕກ ເສຍໃຫ້ແກ່ສະຫຍາມ. ຊາວວຽງຈັນ ແລະ ຊາວຈຳປາສັກມີຈິດໃຈທະນົງອົງອາດ ຮັກກຽດສັກສີ ຮັກສິດທິເອກະລາດ ຈຶ່ງບໍ່ຍິນດີປຣິຕາໃຊ້ທຸງຊ້າງສາມຫົວ ເພາະທຸງຊ້າງສາມຫົວ ແມ່ນທຸງຂອງກຸງສະຫຍາມ.

ຄວນຮູ້ວ່າ ທຸງຊ້າງສາມຫົວນີ້ ມີມາແຕ່ໃສ ໃຜເປັນເຈົ້າຂອງແທ້ ກ່ອນແຜ່ມາຮອດຫຼວງພະບາງ.

ປະຫັວດສາດຂອງສະຫຍາມກ່າວວ່າ ໃນສະໄໝກ່ອນນັ້ນ ທຸງ

ຊາດຂອງສະຫຍາມແມ່ນທຸງສີແດງ ມີຮູບຊ້າງເຜືອກຢູ່ກາງ. ຄັນ ຮອດລາຊະການທີສອງຂອງກະສັດແຫ່ງລາຊະວົງຈັກກຣີ ຄືພະພຸດ ທະເລີດຫຼ້ານະພາໄລ ໄດ້ຊ້າງເຜືອກສາມຕົວມາເສີມຄູ່ບາລະມີ. ໄທ ກືວ່າຊ້າງເຜືອກເປັນສັດມຸງຄຸນຄໍ້າຄູນອັນປະເສີດ ຈຶ່ງໃຊ້ຮູບຊ້າງ ເຜືອກສາມຫົວຕິດໃສ່ພື້ນທຸງສີແດງ ຍົກເປັນທຸງຊາດຂອງສະຫຍາມ ເວລານັ້ນລາວຕົກຢູ່ໃຕ້ອຳນາດຂອງສະຫຍາມແລ້ວ. ເພື່ອໃຫ້ໄດ້ໃຈ ສະຫຍາມ ເພື່ອໃຫ້ເກີດຄວາມເຊື່ອກືໄວ້ເນື້ອເຊື່ອໃຈແກ່ສະຫຍາມ, ຫຼວງພະບາງຈຶ່ງເລືອກໃຊ້ທຸງຊ້າງສາມຫົວເປັນທຸງປະຈຳລາຊະສຳ ນັກຫຼວງພະບາງ ຫຼື ວ່າເປັນທຸງຂອງພະລາຊະອານາຈັກຫຼວງພະ ບາງ (ບໍ່ໝາຍເອົາວຽງຈັນ ແລະ ຈຳປາສັກ) ອາດແມ່ນດ້ວຍເຫດ ນີ້ເຫດໜຶ່ງທີ່ພາໃຫ້ຫຼວງພະບາງບໍ່ກືກທຳລາຍເຜົາຜານ. ເມື່ອສະ ພາບການຕົວຈິງເປັນຄືດັ່ງນີ້, ທຸງຊ້າງສາມຫົວຈຶ່ງບໍ່ແມ່ນທຸງຊາດ ຂອງລາວ ແມ່ນທຸງຊາດຂອງສະຫຍາມທີ່ຫຼວງພະບາງນຳມາໃຊ້ ເພື່ອປະໂຫຍດຂອງຫຼວງພະບາງ ແລະ ກໍ່ໄດ້ໃຊ້ມາເລື້ອຍໆ ໂດຍບໍ່ມີ ການຕໍ່ວ່າຕໍ່ຂານໃດໆ. ທັງນີ້ກໍ່ໂດຍທີ່ມີການສະລັບຊັບຊ້ອນ ແລະ ຂັດ ແຍ່ງຕິດພັນກັນລະຫວ່າງອຳນາດອິດທິພົນຂອງນາຍຜູ້ປົກຄອງ.

ໃນການະທີ່ສະຫຍາມ ໄດ້ມີອິດທິພົນຄອບງຳລາວມາກວ່າ 114 ປີ ຈຶ່ງຄວນຮູ້ປະຫວັດໂດຍສັງເຂບຂອງທຸງໄທດັ່ງນີ້ : ເດີມແທ້ ຄືແຕ່ສະໄໝທຳມະທູດໄທເດີນທາງໄປປະເທດສີລັງການັ້ນ ໄດ້ໃຊ້ຜ້າ ສີແດງເປັນທຸງຕິດຫົວເຮືອເດີນທະເລ.

ຮອດປີ 1779 ລາວຕົກຢູ່ໃຕ້ອຳນາດຂອງສະຫຍາມໃນລາ

ຊະການຂອງກະສັດພະເຈົ້າຕາກສິນ ແລະ ກ່ອນກະສັດອົງທີໜຶ່ງ ຂອງວົງຈັກກຣີ ... ກະສັດຕາກສິນມະຫາຣາຊໃຊ້ໃຫ້ກະສັດອົງທີໜຶ່ງ ຂອງລາຊະວົງຈັກກຣີ, ສະໄໝຍັງເປັນສົມເດັດເຈົ້າພະຍາມະຫາກະສັດເສິກ(1779) ຍົກທັບມາປາບປາມວຽງຈັນຫຼັງຈາກແລ້ວເສິກທາງພະ ມ້າ ; ແລະຍົກທັບໄປປາບພະມົມເປັນໃນປີ 1773 ກ່ອນເຈົ້າຕາກສິນກືກຈັບ ແລະ ສຳເລັດລົງໂທດ... ປາງນັ້ນໄທເລີ້ມຕົ້ນໃຊ້ທຸງສີແດງມີຫົວຊ້າງເຜືອກເປັນທຸງຊາດ ຄັນຮອດປາຍສະໄໝກະສັດອົງທີສອງຂອງຣາຊວົງຈັກກຣີ ຈຶ່ງໄດ້ມີການນຳໃຊ້ທຸງຕ່າງໆອີກຫຼາຍທຸງ ແລະ ກຳນົດເອົາທຸງຊາດສະຫຍາມສີແດງ ແລະ ໃຫ້ມີຮູບຊ້າງ ເຜືອກສາມຫົວຢູ່ໃນກົງຈັກ. ໃນສະໄໝນີ້ເອງ ທຸງຊ້າງສາມຫົວຂອງສະຫຍາມກໍ່ຈຶ່ງໄດ້ເຂົ້າສູ່ຫຼວງພະບາງ.

ຮອດປີ 1855 ໃນຣາຊກາລຂອງກະສັດອົງທີສີ່ວົງຈັກກຣີ ສະຫຍາມໃຊ້ທຸງຊາດມີຊ້າງເຜືອກສາມຫົວ ແຕ່ບໍ່ມີກົງຈັກ ... ເອົາກົງຈັກອອກ.

ຮອດປີ 1917 ໃນລາຊະການອົງທີ 6, ສະຫຍາມຍັງໃຊ້ທຸງຊ້າງສາມຫົວ. ໃນປາຍສະໄໝຈຶ່ງປ່ຽນໃຊ້ທຸງຊາດສາມສີຊື່ວ່າ ທຸງໄຕຣຣົງ ຕາມພາສາສັນສະກຣິດ ແລະ ໃຊ້ທຸງນີ້ມາເຖິງປັດຈຸບັນ...

# ວົງເດືອນຍານບຸສະຕິ

ທຸງວົງເດືອນ ປິວກວັດ ແກວ່ງໄກວສະອອນອື້ນ
ອື້ນ ປະຫວັດ ຂຽນໄວ້ ໃນແຜ່ນຄຳສະລັກຊື່
ລືເລົ່າກຽດ ເກິ່ງຟ້າ ດາລາລ້ຳເລີດລອຍ

ສຽງ ໄຊໂຍ ໂຮຮ້ອງ ໂຮມລາວເລວຮີບ
ລາວ ອິດສະຫຼະ ຜາບແພ້ ສັດຕູຮ້າຍມອດມະລາຍ
ຊາດ ລາວຈຶ່ງໄດ້ ຍືນຢູ່ໝັ້ນ ຕັ້ງທ່ຽງຄົງສະຖຽນ

ສິບສອງຕຸລາ ປີສີ່ສິບຫ້າ ກ້າແກ່ນປະກາສິດ
ຕິດທຸງແດງ ຂາວຟ້າ ວົງເດືອນທຽມເທິງເມກ
ເອກກະລາດ ກູ້ກອບໄດ້ ລາວເປັນເຈົ້າແຜ່ນຖະພິ

ສະຖາປະນາ ລາວຂຶ້ນ ເປັນເສລີລັດ ລາດປະຊາ
ເປັນນາວາ ລອຍລຳ ລິ່ນຫຼັງຈະເລີນກ້າວ
ກ້າວເດີນດີ ທ່ຽງແທ້ ສາມັກຄີຫຸ້ມຫໍ່
ຫໍ່ຫຸ້ມໃຈ ຊໍ່ຊ້ອງ ລາວເຫຼື້ອມຢຸກສະໄໝ
ແທ້ໃດ ! ! !

ທຳ ໄຊຍະສິດເສນາ.

# ລາວມີທຸງຊາດລາວແລ້ວ

ຮອດສະໄໝລາວອິດສະຫຼະກູ້ເອກະລາດ ປີ 1945 ຄະນະນຳຂອງຂະບວນການລາວອິດສະຫຼະ ໄດ້ສຶກສາຄົ້ນຄວ້າບັນຫາທຸງຊາດນີ້ຢ່າງກົ້ກວ້ນເລິກເຊິ່ງ, ຮອບຄອບ, ເຫັນເປັນເອກະສັນກັບສະພາບທີ່ກ່າວເທິງນີ້ ແລະ ຈຶ່ງເອົາມະຕິວ່າ : ຊາດທຸກຊາດໃນໂລກທີ່ມີເອກະລາດຕ້ອງມີທຸງຊາດທີ່ມີເອກະລັກຂອງຕົນເດັດຂາດ, ບໍ່ຍອມເອົາທຸງຊາດຂອງຊາດອື່ນມາເປັນຂອງຕົນ ເພາະອັນນັ້ນມັນໝາຍຄວາມວ່າຕົນເປັນເມືອງຂຶ້ນຂອງເຂົາຜູ້ເປັນເຈົ້າຂອງທຸງນັ້ນ.

ໃນເວລານັ້ນມີເຫດການສຳຄັນທາງປະຫວັດສາດເກີດຂຶ້ນຄືໃນວັນທີ 11 ເດືອນ ຕຸລາ ປີ 1945, ເວລາ 19 ໂມງ 30 ນາທີ ສູນບັນຊາການທີ່ວຽງຈັນໄດ້ລັບໂທລະເລກຈາກພະລາຊະວັງຫຼວງພະບາງແຈ້ງວ່າ "*ເຈົ້າສີສະຫວ່າງວົງໄດ້ລາອອກຈາກພະລາຊະບັນລັງແລ້ວນັບແຕ່ວັນນີ້ໄປ*". ໂດຍບໍ່ມີການແຕ່ງຕັ້ງຜູ້ໜຶ່ງຜູ້ໃດແທນ, ຈຶ່ງມີຜົນສະທ້ອນທາງນິຕິກຳການເມືອງຄື :

1. ນາຍົກລັດຖະມົນຕີ, ມະຫາອຸປະລາດເພັດຊະລາດຂອງພະລາຊະວັງຫຼວງພະບາງ, ໝົດໜ້າທີ່ -- ຕົກໄປ (ມີພະບໍຣົມຣາຊອົງການ ລົງວັນທີ 10-10-1945 ປົດເຈົ້າເພັດຊະລາດອອກຈາກຕຳແໜ່ງມະຫາອຸປະລາດ ແລະ ຕຳແໜ່ງນາຍົກລັດຖະມົນຕີ).
2. ລັດຖະບານພະລາຊະວັງຫຼວງພະບາງໝົດສະພາບ, ບໍ່ເປັນ

ລັດຖະບານ -- ລັດຖະມົນຕີຕົກໝົດທຸກຄົນ.

3. ທຸງປະຈຳພະລາຊະວັງຫຼວງພະບາງໝົດສະພາບຕາມກັນ. ທຸງກໍບໍ່ແມ່ນທຸງຊາດລາວ. ປະເທດຊາດລາວຈຶ່ງບໍ່ມີທຸງຊາດ.

ກ່ອນນີ້ ມີລັດຖະບານຂອງພະລາຊະວັງຫຼວງພະບາງ ໂດຍມີສະເດັດເຈົ້າມະຫາອຸປະລາດເພັດຊະລາດ ເປັນນາຍົກລັດຖະມົນຕີ. ເມື່ອພາຍຫຼັງຕັ້ງລັດຖະບານລາວອິດສະຫຼະຂຶ້ນ ເລີຍມີລັດຖະບານຊຸດທີ່ສອງຊ້ອນຢູ່ຄູ່ກັນເປັນສອງລັດຖະບານ, ໂດຍໄດ້ປ່ອຍໃຫ້ເຈົ້າເພັດຊະລາດເຄື່ອນໄຫວປະຕິບັດໜ້າທີ່ຕໍ່ໄປສອງອາທິດ. ທັງນີ້ເພື່ອຫຼີກເວັ້ນການກະທົບ ຫຼື ປະທະກັນ, ພາໃຫ້ຄົນເຂົ້າໃຈຜິດວ່າເຈົ້າເພັດຊະລາດຍັງຢູ່ໃນຕຳແໜ່ງບໍລິຫານ. ການປົດຕຳແໜ່ງເຈົ້າເພັດຊະລາດກໍຖືກປົກປິດບໍ່ເປີດເຜີຍ.

ໄດ້ກ່າວຢູ່ເທິງນີ້ວ່າ ມີສອງລັດຖະບານຊ້ອນກັນຄື : ລັດຖະບານໃໝ່ ຂອງລາວອິດສະຫຼະ ແລະ ລັດຖະບານເກົ່າຂອງ ພະລາດຊະວັງຫຼວງພະບາງ ຊຶ່ງເຈົ້າມະຫາຊີວິດຈັດຕັ້ງຂຶ້ນ. ສ່ວນລັດຖະບານລາວອິດສະຫຼະນັ້ນ ແມ່ນລັດຖະບານຈັດຕັ້ງຂຶ້ນໂດຍຂະບວນມະຫາຊົນລາວອິດສະຫຼະກູ້ຊາດໄດ້ໄຊຊະນະ ແລະ ປະກາດເອກະລາດຂອງຊາດ. ແມ່ນລັດຖະບານຊຸດແຮກຂອງຊາດ ພາຍຫຼັງເປັນເອກະລາດ. ຖືວ່າມີຄວາມສຳຄັນຍິ່ງໃຫຍ່ອີກຄັ້ງໜຶ່ງໃນປະຫວັດສາດຊາດລາວ, ເປັນການສົມຄວນທີ່ຜູ້ອ່ານຈະໄດ້ຮູ້ວ່າ ລັດຖະບານຊຸດທີໜຶ່ງຂອງຊາດເອກະລາດນີ້ ປະກອບດ້ວຍບຸກຄົນສຳຄັນຜູ້ໃດແດ່ຊຶ່ງມີລາຍນາມດັ່ງນີ້ :

- ພະຍາຄຳມ້າວ ເປັນນາຍົກລັດຖະມົນຕີ.
- ສະເດັດເຈົ້າສຸວັນນະພູມມາ ເປັນລັດຖະມົນຕີວ່າການກະຊວງໂຍທາ ແລະ ໄຫລະຄົມມະນາຄົມ.
- ທ້າວ ຫຍຸຍ ລັດຖະມົນຕີກະຊວງສຶກສາທິການ.
- ທ້າວກະຕ່າຍ ລັດຖະມົນຕີກະຊວງການຄັງ.
- ທ້າວທຳ ລັດຖະມົນຕີກະຊວງຕ່າງປະເທດ.
- ທ້າວສິງ ລັດຖະມົນຕີກະຊວງປ້ອງກັນປະເທດ.
- ເຈົ້າສົມສະນິດ ລັດຖະມົນຕີກະຊວງພາຍໃນ ແລະ ຍຸຕິທຳ.
- ທ້າວອຸ່ນ ລັດຖະມົນຕີກະຊວງກະເສດ.
- ເພັຍອຸ່ນເຮືອນ ລັດຖະມົນຕີຊ່ວຍກະຊວງພາຍໃນແລະຍຸຕິທຳ.
- ທ້າວ ເກື່ອງ ລັດຖະມົນຕີຊ່ວຍກະຊວງກະເສດ.

ລວມມີກະຊວງ 8 ກະຊວງ ມີຕຳແໜ່ງລັດຖະມົນຕີ 10 ຕຳແໜ່ງ. ຈຳນວນທີ່ນີ້ບໍ່ຂາດບໍ່ເຫຼືອເທົ່າທີ່ໄດ້ປະກາດເປັນທາງການຢ່າງສະຫງ່າຜ່າເຜີຍຕໍ່ໜ້າມະຫາຊົນມືດຟ້າມົວດິນໃນເວລາ 7 ໂມງ 30 ນາທີ ຂອງວັນທີ 12 ຕຸລາ ປີ 1945.

ໃນຕະຫຼອດເວລາກູ້ຊາດ ແລະ ປະກາດເອກະລາດນັ້ນ ຂະບວນການລາວອິດສະຫຼະມີນະໂຍບາຍເພີ່ມພູນ ແລະ ລວບລວມກຳລັງສາມັກຄີພາຍໃນຊາດໜັກໜ່ວງ.

ວັນທີ 19/10/1945 ສະເດັດເຈົ້າສຸພານຸວົງ, ເວລານັ້ນຢູ່ທີ່ເມືອງວິງ ປະເທດຫວຽດນາມ, ໄດ້ເດີນທາງມາເຖິງວຽງຈັນ.

ວັນທີ 20/10/1945 ປະຊຸມຄະນະລັດຖະບານລາວອິດສະຫຼະ

ພິຈາລະນາຮັບເອົາສະເດັດເຈົ້າສຸພານຸວົງເຂົ້າເປັນລັດຖະມົນຕີວ່າການກະຊວງຕ່າງປະເທດ, ຊຶ່ງຕຳແໜ່ງນີ້ແຕ່ເດີມແມ່ນຕຳແໜ່ງຂອງທ້າວທຳ ແຕ່ທ້າວທຳພໍໃຈເສຍສະຫຼະ ແລະ ມອບໃຫ້ແກ່ເຈົ້າສຸພານຸວົງເພື່ອໄດ້ພະລັງການເມືອງ ( ແມ່ນການເສຍສະຫຼະອັນໃຫຍ່ຫຼວງທີ່ບໍ່ເຄີຍມີ ) ສ່ວນທ້າວທຳ ປ່ຽນໄປຮັບຕຳແໜ່ງໃໝ່ສອງຕຳແໜ່ງທີ່ຈັດຕັ້ງຂຶ້ນຕື່ມ ຄືຕຳແໜ່ງລັດຖະມົນຕີຊ່ວຍວ່າການກະຊວງຕ່າງປະເທດ ແລະ ຕຳແໜ່ງລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນປະເທດ. ທີ່ສຸດກໍ່ຈຶ່ງລວມກະຊວງເປັນ 8 ກະຊວງ, ຕຳແໜ່ງລັດຖະມົນຕີມີ 8 ຕຳແໜ່ງ ແລະ ຕຳແໜ່ງລັດຖະມົນຕີຊ່ວຍວ່າການມີ 4 ຕຳແໜ່ງ. ຈຶ່ງກ່າວໄດ້ວ່າມີການປັບປຸງຄະນະລັດຖະບານລາວອິດສະຫຼະຄັ້ງໜຶ່ງ.

ລັດຖະບານລາວອິດສະຫຼະຊຸດແລກຂອງຊາດທີ່ປັບປຸງນັ້ນມີລັດຖະມົນຕີຕື່ມຂຶ້ນ 1 ຄົນ ແລະ ມີການຈັດຕັ້ງໃໝ່ດັ່ງນີ້ :

- ພະຍາຄຳມ້າວ ເປັນນາຍົກລັດຖະມົນຕີ.
- ສະເດັດເຈົ້າ ສຸວັນນະພູມມາ ເປັນລັດຖະມົນຕີວ່າການກະຊວງ ໂຍທາ ແລະ ໂທລະຄົມມະນາຄົມ.
- ທ້າວ ຫຍູຍ ລັດຖະມົນຕີກະຊວງສຶກສາທິການ.
- ທ້າວ ກະຕ່າຍ ລັດຖະມົນຕີກະຊວງການຄັງ.
- ສະເດັດເຈົ້າ ສຸພານຸວົງ ລັດຖະມົນຕີກະຊວງຕ່າງປະເທດ.
- ທ້າວ ສິງ ລັດຖະມົນຕີກະຊວງປ້ອງກັນປະເທດ.
- ເຈົ້າສົມສະນິດ ກະຊວງພາຍໃນ ແລະ ຍຸຕິທຳ.
- ທ້າວ ອຸ່ນ ລັດຖະມົນຕີກະຊວງກະເສດ.

- ທ້າວ ທໍາ ລັດກະມົນຕີຊ່ວຍວ່າການກະຊວງຕ່າງປະເທດ.
- ທ້າວ ທໍາ ລັດກະມົນຕີຊ່ວຍວ່າການກະຊວງປ້ອງກັນປະເທດ.
- ເພັຍອຸ່ນເຮືອນ ລັດກະມົນຕີຊ່ວຍວ່າການກະຊວງພາຍໃນ ແລະ ຍຸຕິທໍາ.
- ທ້າວ ເກື່ອງ ລັດກະມົນຕີຊ່ວຍວ່າການກະຊວງກະເສດ.

ເຈົ້າເພັດຊະລາດຮູ້ຢູ່ເຕັມປະຕູວ່າ ເຈົ້າມະຫາຊີວິດໄດ້ຮ້ອງຂໍໃຫ້ຝຣັ່ງກັບຄືນມາປົກຄອງລາວ (ໂດຍໂທລະເລກລັບລົງວັນທີ 7-9-1945. ທີ່ສົ່ງເຖິງເພັດຊະລາດເອງ). ເພັດຊະລາດກໍມີໜ້າທີ່ປະຕິບັດຕາມກະສັດແບບມີລີລາເລ້ຫຼຽມສະຫຼາດສະຫຼວ).

ເວລານັ້ນວຽງຈັນຕົກຢູ່ພາຍໃຕ້ອໍານາດຂອງ ລປລ. ໝົດແລ້ວ ປະຊາຊົນບໍ່ຟັງເພັດຊະລາດ (ເພາະເພິ່ນກໍບໍ່ມີອັນຈະເວົ້າໃຫ້ຟັງ) ແຕ່ເອົາຟັງ ລປລ. ທຸກວັນ (ເພາະມີຂ່າວເປັນສາລະສໍາຄັນສູ່ຟັງ) ເອົາສະໝັກເຂົ້າເປັນທະຫານ ລປລ. ຈົນຮັບນໍາບໍ່ທັນ - ເພັດຊະລາດນັ້ນໃສ່ຈະເອົາໃຈ ລປລ. ໃສ່ຈະເອົາໃຈຝຣັ່ງ.

ຫຼັງຈາກໄດ້ພົບກັບພັນຕີ ຟາເບລີ, ນາຍທະຫານຝຣັ່ງຢູ່ທີ່ເຮືອນພັກຂອງເພິ່ນເອງແລ້ວ, ມື້ໜຶ່ງເຈົ້າເພັດຊະລາດໄດ້ເຊີນພັນເອກສິງ (ເວລານັ້ນເປັນລັດກະມົນຕີວ່າການກະຊວງປ້ອງກັນປະເທດ) ໃຫ້ມາພົບຢູ່ທີ່ໂຮງພັກເພິ່ນເອງ, ໄດ້ບອກພັນເອກສິງ ຊຶ່ງຍັງເປັນຜູ້ບັນຊາການທະຫານກອງຮ້ອຍບັນຊາການຄ້າຍ (QG. Quartier Général ) ແປວ່າ ກອງບັນຊາການສູງສຸດ. ໃຫ້

ເປີດປະຕູຄ້າຍຮັບເອົາທະຫານຝຣັ່ງໜຶ່ງກອງຮ້ອຍ, ບັນຊາໂດຍ ພັນຕີຟາເບລີ, ເຂົ້າຢູ່ອາໄສໃນຄ້າຍດຽວກັນກັບທະຫານລາວອິດສະຫຼະຄ້າຍກຸຍເຊ. ພັນເອກສິງມີທະຫານນາຍສິບ ນາຍຮ້ອຍເປັນອົງຄະລັກຕິດຕາມຮູ້ເຫັນເປັນພະຍານ. ພັນຕີຟາເບລີ ໄດ້ໂອກາດນຳເອົາວິທະຍຸສື່ສານທະຫານເຂົ້າມາຕິດຕັ້ງຢູ່ຕໍ່ໜ້າຄ້າຍທະຫານລາວພ້ອມນັ້ນ ຍັງໄດ້ຊັກທຸງຊາດຝຣັ່ງຂຶ້ນຍອດເສົາ.

ທັນທີພັນເອກສິງສັ່ງຍ້າຍທະຫານກອງຮ້ອຍບັນຊາການລາວອິດສະຫຼະໜີອອກຈາກຄ້າຍກຸຍເຊ ໄປຕັ້ງໜັ້ນຢູ່ໃນວັດທໍ່ພະແກ້ວ ຕິດກັບເຮືອນພັກຂອງເຈົ້າເພັດຊະລາດເພື່ອເປີດໂອກາດໃຫ້ທະຫານຝຣັ່ງເຂົ້າໄປຢູ່ໄດ້ຕາມຕ້ອງການຂອງເພັດຊະລາດ ແລະ ຫຼີກເວັ້ນການຍິງກັນຢູ່ໃນກາງນະຄອນວຽງຈັນ. ລອງຄິດເບິ່ງວ່າ ເວລານັ້ນຄວາມປັ່ນປ່ວນວຸ້ນວາຍ ຄວາມສະທ້ານຢ້ານກົວຂອງປະຊາຊົນເກີດຂຶ້ນຂະໜາດໃດ ? ເລືອດຮັກຊາດພຸ່ງພົ້ນຂຶ້ນສຸດຂີດ, ມີການອົດກັ້ນບໍ່ລັ່ນໄກປືນຍິງກັນຈົນມືສັ່ນ.

ໃນທັນທີທັນໃດນັ້ນ ຂະບວນການປະຊາຊົນ ແລະ ລປລ. ອັນເປັນກຳລັງມະຫາຊົນໄດ້ຟົດຟື້ນລຸກຮືຂຶ້ນ ຕໍ່ຕ້ານການກະ ທຳນັ້ນທັນທີ ແລະ ແຜ່ກະຈາຍຟົດຟື້ນັ້ນໄປທົ່ວວຽງຈັນໄວວາ. ມີແຫ່ກະບວນຂຽນປ້າຍຮ້ອງໂຮໂປປີບ = ລາວເປັນລາວ ! ລາວເປັນລາວ ! ລາວເປັນລາວ ! ລາວບໍ່ເປັນຝຣັ່ງ. ສຽງຟົດສະນັ່ນປັ່ນພົ້ນຄັບກະໜົນຫົນທາງ --- ຈົນທະຫານຝຣັ່ງບໍ່ກ້າສາມາດຕັ້ງຕົວຢູ່ໃນວຽງຈັນ ແລະ ໄດ້ຖອຍໜີອອກໄປຢູ່ບ້ານເກີນຕາມເດີມເພັດຊະລາດໝົດອຳ

ບາດ.

ເຫດການນີ້ ບອກເຮົາກັບການປະຕິເສດບໍ່ຍອມເປັນນາຍົກລັດຖະມົນຕີໃຫ້ລັດຖະບານລາວອິດສະຫຼະນັ້ນຍ່ອມເປັນຜົນສະທ້ອນຕິດພັນກັນ ພິສູດສະແດງວ່າເຈົ້າເພັດຊະລາດບໍ່ແມ່ນລາວອິດສະຫຼະ, ບໍ່ແມ່ນຫົວໜ້າ ລປລ ແລະ ຈຶ່ງເຂົ້າໃຈໄດ້ວ່າ ການເຄື່ອນໄຫວແລະ ການກະທຳທຸກຢ່າງຂອງເຈົ້າເພັດຊະລາດແມ່ນໃນຖານະເປັນລັດຖະບານຂອງພະລາຊະວັງຫຼວງພະບາງ ; ແລະ ທັງໄດ້ສິ່ງຜົນເປັນແຮງດັນໃຫ້ມະຫາຊົນທັນເຂົ້າມາສະນິດຕິດແໜ້ນກັບ ລປລ. ເປັນທະວີຄູນຍິ່ງຂຶ້ນຮ້ອຍສ່ວນຮ້ອຍ. ໃນສະໄໝກໍ່ຕັ້ງລາວອິດສະຫຼະກໍດີ, ໃນສະໄໝປີ 1940 ຈະຢຶດວຽງຈັນກໍດີ ເຈົ້າເພັດຊະລາດບໍ່ເຄີຍໄດ້ຢູ່ໃນຂະບວນ, ບໍ່ເຄີຍຮູ້ເລື່ອງໃດໆຂອງ ລປລ. ສຸດທ້າຍໃນປີ 1945 ເຈົ້າເພັດຊະລາດກໍ່ຊ້ຳປະຕິເສດບໍ່ເຂົ້າເປັນລາວອິດສະຫຼະ (ບໍ່ເປັນນາຍົກລັດຖະມົນຕີໃຫ້ລັດຖະບານລາວອິດສະຫຼະຕາມຄຳທູນເຊີນ) ກໍ່ຈຶ່ງບໍ່ແມ່ນລາວອິດສະຫຼະ. ແຕ່ຝຣັ່ງ ແລະ ພະລາຊະວັງຫຼວງພະບາງຊ້ຳພັດເຂົ້າໃຈວ່າເຈົ້າເພັດຊະລາດເປັນຫົວໜ້າລາວອິດສະຫຼະເປັນກະບົດ ຈຶ່ງໄດ້ສັ່ງປົດອອກຈາກຕຳແໜ່ງສັກດິນາມະຫາອຸປະຣາດແລະ ນາຍົກລັດຖະມົນຕີຂອງ ພະລາຊະວັງ.

ສະນັ້ນ ຫຼັງຈາກວັນທີ 12 ຕຸລາ ປີ 1945 ລາວມີເອກະລາດແລ້ວ, ຈຳເປັນຕ້ອງມີທຸງຊາດທັນທີທັນໃດ ຄະນະນຳຂອງຂະບວນການລາວອິດສະຫຼະ ຈຶ່ງພິຈາລະນາທັນທີທັນໃດນັ້ນໂລດ. ໃນນັ້ນຜູ້ເປັນຫົວໜ້າ+ກໍ່ໄດ້ເອົາສຳນວນການສ້າງທຸງຊາດລາວທີ່ໄດ້ກະກຽມ

+ ດີ ເທົ່ານັ້ນ

ໄວ້ແລ້ວອອກສະເໜີຕໍ່ກອງປະຊຸມຂອງຄະນະ ... ອັນມີ ທ້າວ ທຳ, ທ້າວ ບົງ ສີລັດຕະນະກຸນ, ທ້າວ ສິງ, ທ້າວ ອຳພອນ ພົນລາດ, ທ້າວ ຄຳໃບ,ທ້າວ ອູ, ທ້າວ ບົວຈັນ, ເຂົ້າລວມ ພາຍຫຼັງການອະທິບາຍກົກກຽງກັນຍາວນານສົມຄວນ ຮອດໜຶ່ງຊົ່ວໂມງ ຈຶ່ງມີມະຕິຕົກລົງເອົາຮູບ ທຸງຊາດຜືນໃໝ່ຕາມທີ່ຜູ້ເປັນຫົວໜ້າໄດ້ສະເໜີນັ້ນ. ຕໍ່ຈາກນັ້ນ <u>ທຸງຊາດລາວກໍຈຶ່ງເກີດຂຶ້ນເປັນຕົວຕົນໃຫ້ຊື່ວ່າ</u> : ທຸງຈັນ ເພັງ ຫຼື ທຸງພະຈັນວັນເພັງ, ຫຼື ທຸງວົງເດືອນ.

ຮອດບ່ອນນີ້ ຂໍອະນຸຍາດຍົກເອົາບັນຫາການລວມຜືນແຜ່ນດິນລາວ ເປັນແຜ່ນດິນດຽວມາແຊກໄວ້ນ້ອຍໜຶ່ງ ເພາະມີຄວາມສຳຄັນຍິ່ງໃຫຍ່ ເປັນຊີວິດຄວາມເປັນຄວາມຕາຍຂອງຊາດ ແລະ ຂອດນີ້ຄະນະນຳລາວອິດສະຫຼະກໍ່ໄດ້ຍົກຂຶ້ນເປັນກະແຫຼງການສະບັບໜຶ່ງໃນຈຳນວນກະແຫຼງການຫ້າສະບັບຂອງການປະກາດເອກະລາດ 12 ຕຸລາ 1945. ແຜ່ນດິນແມ່ນວັດຖຸຮູບປະທຳພື້ນຖານ, ບ່ອນຊຶ່ງລາວທຸກຄົນຍືນຢູ່ ດຳລົງຊີວິດຢູ່ໄດ້ຕະຫຼອດມາຈົນເທົ້າເຖິງທຸກວັນນີ້. ຖ້າບໍ່ມີແຜ່ນດິນລາວຄົງບໍ່ມີບ່ອນຢູ່ອາໃສ ຄົງຈຳເປັນຕ້ອງໄດ້ໄປຂໍຢູ່ອາໃສໃນແຜ່ນດິນຂອງຊາດອື່ນ. ອີກປະການໜຶ່ງກໍ່ມີຄວາມເຂົ້າໃຈບໍ່ໂປ່ງໃສສອດຄ່ອງກັບຄວາມເປັນຈິງແທ້ກ່ຽວກັບຂໍ້ມູນເລື້ອງລວມແຜ່ນດິນເປັນແຜ່ນດິນດຽວ ໃນສະໄໝລາວອິດສະຫຼະກູ້ຊາດໂດຍທີ່ບໍ່ເຂົ້າໃຈວ່າ ແມ່ນການກະທຳຂອງລາວອິດສະຫຼະແທ້ ທຸງຊາດແມ່ນຕົວແທນຂອງຊາດ ອັນມີແຜ່ນດິນເປັນສຳຄັນພື້ນຖານຕິດພັນກັນ. ສະນັ້ນ ການຮູ້ປະຫວັດການລວມແຜ່ນດິນ, ການໄດ້ແຜ່ນດິນ, ການ

ເສຍແຜ່ນດິນ, ຈຶ່ງເປັນຄວາມຈຳເປັນທີ່ສຳຄັນອັບເອົາເປັນເອົາຕາຍສຳຫຼັບລາວ.

ເປັນອັນຮູ້ກັນແຈ້ງວ່າ ກ່ຽວກັບເລື້ອງນີ້ ຜູ້ເປັນວິລະມະຫາກະສັດ ເດີນທັບລວມແຜ່ນດິນລາວໃຫ້ເປັນແຜ່ນດິນດຽວຄັ້ງທີ່ໜຶ່ງນັ້ນ ແມ່ນພະເຈົ້າຟ້າງຸ່ມມະຫາລາດ, ຜູ້ນອງການໄກເຫັນຄວາມຈຳເປັນຕ້ອງສ້າງຄວາມສາມັກຄີມະຫາສາມັກຄີພາຍໃນຊາດ ເພື່ອບໍ່ໃຫ້ຊາດຕົກເປັນຂີ້ຂ້າຊາດອື່ນ.

ໃນເວລາປະຊຸມພິຈາລະນາເລື້ອງທຸງຊາດນັ້ນ ຫົວໜ້າຂະບວນການລາວອິດສະຫຼະໄດ້ຍົກເອົາບັນຫາເລື້ອງລວມແຜ່ນດິນລາວໃຫ້ເປັນແຜ່ນດິນດຽວສະເໜີຕໍ່ທີ່ປະຊຸມ, ຊຶ່ງເມື່ອໄດ້ພິຈາລະນາບັນຫາຢ່າງເລິກເຊິ່ງເຖິງໃຈແລ້ວ ກອງປະຊຸມກໍ່ໄດ້ມີມະຕິຕົກລົງໜັກແໜ້ນໃຫ້ປະກາດລວມແຜ່ນດິນລາວເປັນແຜ່ນດິນດຽວ (ເພາະເວລານັ້ນ ລາວຍັງແຕກເປັນພາກ ຫຼວງພະບາງ, ວຽງຈັນ ແລະ ຈຳປາສັກຢູ່ ບໍ່ມີຫຼັກການເອກະສານໃດໆ ບອກວ່າໄດ້ລວມແຜ່ນດິນກ່ອນແລ້ວ ).

ໃນທີ່ສຸດ, ບັນຫາແກ່ນສານເລື້ອງທຸງຊາດຜືນໃໝ່ ແລະ ເລື້ອງປະກາດລວມແຜ່ນດິນລາວເປັນແຜ່ນດິນດຽວ ແຕ່ເໜືອຮອດໃຕ້ -- ທັງສອງເລື້ອງກໍ່ໄດ້ຮັບມະຕິຮັບຮອງ ຈາກຄະນະລັດຖະບານລາວອິດສະຫຼະ ແລະ ຈາກສະພາຜູ້ແທນລາຊະດອນ ໃຫ້ເປັນນິຕິກຳອັນຖືກຕ້ອງຂອງຊາດ. ອີກທັ້ງພະເຈົ້າມະຫາຊີວິດກໍ່ໄດ້ເຊັນພະບໍລົມລາຊະອົງການຮັບຮອງເອົານິຕິກຳດັ່ງກ່າວ ໂດຍທີ່ພະເຈົ້າມະຫາ

ຊີວິດໄດ້ກັບຄືນສະເຫວີຍລາຊະສົມບັດແລ້ວ. ( ພະບໍລົມລາຊະໂອງການເລກທີ 1. ລົງວັນທີ 23 ເມສາ 1946 ).

ເມື່ອພິຈາລະນາຕາມຫຼັກນິຕິສາດການເມືອງ ຈຶ່ງເຫັນໄດ້ຈະແຈ້ງວ່າ ການປະກາດໃຊ້ທຸງຊາດຜືນໃໝ່ກໍດີ ການປະກາດລວມແຜ່ນດິນລາວ ໃຫ້ເປັນແຜ່ນດິນດຽວກໍດີ ລ້ວນແຕ່ແມ່ນຜົນການກະທຳທີ່ສຳເລັດແລ້ວທາງນິຕິກຳ ແລະ ທາງພຶດຕິກຳຂອງມະຕິມະຫາຊົນ ຕາມຮູບການຈັດຕັ້ງຂອງລັດຖະສາດການເມືອງທີ່ສົມບູນແບບ. ດັ່ງນັ້ນແຫຼະ ໃນວັນທີ 12 ຕຸລາ ຄ.ສ. 1945 ທັງສອງເລື້ອງກໍ່ຈຶ່ງໄດ້ເຂົ້າຢູ່ໃນຄຳຖະແຫຼງການປະກາດເອກະລາດ 5 ສະບັບ. ສຳຄັນທີ່ສຸດກໍຄືພະບາດສົມເດັດພະເຈົ້າສີສະຫວ່າງວົງ ກະສັດແຫ່ງປະເທດລາວກໍໄດ້ລົງພະນາມໃນພະບໍລົມລາຊະໂອງການ ຮັບຮອງເອົານິຕິກຳສອງ ສະບັບທີ່ກ່າວນີ້ວ່າ ເປັນນິຕິກຳທີ່ຖືກຕ້ອງຕາມກົດໝາຍຂອງຊາດແລະ ຕາມລາຊະປະເພນີລັດຖະສາດ ( ຮັບຮອງວ່າ ການເຄື່ອນໄຫວແລະ ການກະທຳຂອງລາວອິດສະຫຼະ ແມ່ນຖືກຕ້ອງຕາມກົດໝາຍຂອງຊາດ ແລະ ຕາມລາຊະປະເພນີລັດຖະສາດ -- ໂດຍມີເອກະສານຢັ້ງຢືນ ).

ມາໃນໄລຍະຫຼັງຈາກນັ້ນ ໄດ້ມີເອກະສານ ແລະ ໄດ້ມີທັງຜູ້ເປັນນັກຂຽນບາງຄົນທັງລາວ ແລະ ຕ່າງປະເທດ ໄດ້ໃຫ້ຄວາມເຫັນກ່ຽວເລື້ອງລວມແຜ່ນດິນລາວເປັນແຜ່ນດິນດຽວນີ້ ໄປໃນທາງບໍ່ສອດຄ່ອງຖືກຕ້ອງຕາມຂໍ້ມູນຄວາມຈິງທີ່ກ່າວເທິງນີ້ ... ຊຶ່ງສາມາດພາໃຫ້ຜູ້ອ່ານບາງທ່ານ ແລະ ອະນຸຊົນຮຸ່ນຫຼັງບາງຄົນເຂົ້າໃຈໄຂວ່

ຂະເຫວ : ເອົາຜິດເປັນກົກ ເອົາກົກເປັນຜິດໄດ້.

ລາວທຸກຄົນຮູ້ຈັກ ສະເດັດເຈົ້າມະຫາອຸປະລາດເພັດຊະລາດດີ ທັງເຄົາຣົບບູຊາຍົກໄວ້ທີ່ສູງ ເປັນພໍ່ບ້ານແມ່ເມືອງ ... ບໍ່ມີຜູ້ໃດປະຕິເສດໄດ້ວ່າພະອົງຮັກຊາດບ້ານເມືອງໄວ້ເໜືອສິ່ງໃດໃນໂລກ ... ພະອົງໃນຕຳແໜ່ງມະຫາອຸປະລາດ ແລະ ນາຍົກລັດຖະມົນຕີຂອງລັດຖະບານ ຂອງພະບາດສົມເດັດພະເຈົ້າສີສະຫວ່າງວົງແຫ່ງຫຼວງພະບາງ ໄດ້ສະເໜີຮ່າງພະບໍລົມລາຊະໂອງການສະບັບໜຶ່ງຂຶ້ນ ກະຫວາຍບັງ ຄົມທູນຂໍລາຍເຊັນຈາກເຈົ້າມະຫາຊີວິດ, ມີເນື້ອໃນສຳຄັນວ່າໃຫ້ ລວມແຜ່ນດິນລາວພາກກາງ ແລະ ພາກໃຕ້ເຂົ້າກັບຫຼວງພະບາງເປັນອັນດຽວກັນ.

ພະເຈົ້າສີສະຫວ່າງວົງປະຕິເສດບໍ່ລົງພະນາມໃນພະບໍລົມລາຊະໂອງການສະບັບນັ້ນ ( ດ້ວຍເຫດຜົນອັນເລິກແລບໃດນັ້ນຂໍບໍ່ກ່າວໃນເອກກະສານນີ້ -- ຈະກ່າວໃນເອກະສານອື່ນທີ່ມີການຢືນຢັນ ).

ເລື້ອງຈຶ່ງເປັນອັນວ່າ ຮ່າງພະບໍລົມລາຊະໂອງການສະບັບນັ້ນຕົກເປັນໂມຄະລົ້ມເລີກໄປ -- ບໍ່ມີຜົນສຳເລັດໃນທາງນິຕິກຳ ແລະ ພຶດຕິກຳຕາມປະສົງຂອງເຈົ້າເພັດຊະລາດ.

ໃນຍຸກສະໄໝນັ້ນ ມີແຕ່ພະເຈົ້າມະຫາຊີວິດ ສີສະຫວ່າງວົງ ພະເຈົ້າແຜ່ນດິນລາວອົງດຽວທ່ານັ້ນ ທີ່ເປັນຜູ້ມີອຳນາດໜ້າທີ່ເຊັນຊື່ໃນພະບໍລົມລາຊະໂອງການວ່າດ້ວຍການລວມຜືນແຜ່ນດິນເປັນແຜ່ນດິນດຽວ, ຫຼື ການແບ່ງແຜ່ນດິນຕັ້ງຂຶ້ນເປັນແຂວງ, ເປັນກຳ

ແພງນະຄອນ, ບໍ່ແມ່ນບຸກຄົນຜູ້ອື່ນແຕ່ຢ່າງໃດ.  ສະນັ້ນ ເຈົ້າເພັດ
ຊະລາດ, ຊຶ່ງເປັນພຣະເຈົ້າມະຫາອຸບປະຣາດ ແລະ ເປັນພຣະນາ
ຍົກລັດຖະມົນຕີ, ຈຶ່ງໄດ້ແຕ່ສະເໜີຣາງພະບໍລົມລາຊະໂອງການທີ່
ນັ້ນບໍ່ແມ່ນຜູ້ມີສິດຈະເຊັນຊື່ ຈຶ່ງຖືວ່າບໍ່ແມ່ນຜູ້ໄດ້ກະທຳການລວມ
ຜືນແຜ່ນດິນ.

ການລວມຜືນແຜ່ນດິນລາວ ໃຫ້ເປັນແຜ່ນດິນດຽວ ໃນຢຸກສະ
ໄໝນັ້ນ ຈຶ່ງແມ່ນຜົນງານການກະທຳແທ້ຈິງຂອງຂະບວນກູ້ເອກ
ລາດລາວອິດສະຫຼະ ຊຶ່ງເປັນຜູ້ກະທຳຕົວຈິງ ໂດຍມີກົດໝາຍລັດຖະ
ທຳມະນູນ ແລະ ລາຊະປະເພນີລັດຖະສາດເປັນຫຼັກຄ້ຳປະກັນ ຊຶ່ງພະ
ເຈົ້າສີສະຫວ່າງວົງກໍ່ໄດ້ຮັບຮອງເອົາແລ້ວ. ການທີ່ລາວອິດສະຫຼະໄດ້
ກະທຳໄປນັ້ນ ແມ່ນຕາມເຫດຜົນທີ່ກ່າວເທິງນີ້ ແລະ ທັງແມ່ນຕາມ
ທິດສະດີການປະຕິວັດລັດຖະປະຫານ. ( ການກູ້ເອກະລາດຂອງລາວ
ອິດສະຫຼະນັ້ນ ແມ່ນທັ້ງການປະຕິວັດລັດຖະປະຫານໃນຕົວ ).

ສະເດັດເຈົ້າມະຫາອຸປະລາດເພັດຊະລາດ ຕະຫຼອດເວລາບໍລິ
ຫານລາຊະການ ແຜ່ນ ດິນ ສະໜອງພະເດດພະຄຸນຂອງ ເຈົ້າແຜ່ນ
ດິນໃນຕຳແໜ່ງເປັນນາຍົກລັດຖະມົນຕີຂອງລັດຖະບານຂອງພະລາ
ຊະວັງຫຼວງພະບາງນັ້ນ ຊິງທ່ຽງໝັ້ນໃນຄວາມຊື່ສັດ ສຸດຈະລິດ
ຈິງຮັກພັກດີຕໍ່ອົງກະສັດ ຕໍ່ຊາດຕະຫຼອດເວລາ. ເວລາມີຂະບວນ
ການ ກູ້ເອກະລາດລາວອິດສະຫຼະ ພະອົງບໍ່ໄດ້ປ່ຽນທ່າທີ ບໍ່ໄດ້ເຂົ້າໃນ
ຂະບວນການລາວອິດສະຫະ ຫົວໜ້າລາວອິດສະຫຼະໄດ້ເຂົ້າພົບ
ໄດ້ສະເໜີບົດບັນ ທຶກການເມືອງເຊີນຊວນໃຫ້ເຂົ້າລວມເປັນຂະບວນ

ດຽວ ກັບ. ບໍ່ມີ ຄຳຕອບຈາກສະເດັດເລີຍ ເພາະເພິ່ນປະຕິເສດບໍ່ລວມ ເພາະລາວ ອິດ ສະຫຼະ ທຳການລັດຖະປະຫານງຽບ ເພື່ອ ລົບລ້າງ ລັດຖະບານ ຂອງສະເດັດເຈົ້າເພັດຊະລາດເອງ ... ພະອົງຍັງຊື່ສັດ ຈົ່ງຮັກພັກດີຕໍ່ກະສັດ ແລະ ຮັບໃຊ້ກະສັດຈົນຮອດວາລະສຸດທ້າຍ ຄື :

1. ເຈົ້າມະຫາຊີວິດມີພະບໍລົມລາຊະໂອງການປົດເຈົ້າ ມະຫາອຸປະລາດເພັດຊະລາດອອກຈາກຕຳແໜ່ງນາຍົກລັດຖະມົນຕີ ແລະ ມະຫາອຸປະລາດໃນວັນທີ 10 ຕຸລາ 1945.

2. ເຈົ້າມະຫາຊີວິດລາອອກຈາກພະລາຊະບັນລັງ ສົ່ງຜົນໃຫ້ ລັດຖະບານຂອງພະລາຊະວັງໝົດສະພາບເປັນລັດຖະບານ.

3. ເຈົ້າມະຫາຊີວິດໄດ້ຮັບ ຮອງເອົາລັດຖະບານ ລາວອິດສະຫຼະ ເປັນລັດຖະບານຂອງພະອົງ ໂດຍມີພະ ຍາຄຳມ້າວເປັນນາຍົກ ລັດຖະມົນຕີ, ຕຳແໜ່ງນາຍົກ ລັດຖະມົນຕີ ຂອງສະເດັດເຈົ້າເພັດຊະລາດກໍຈົ່ງໝົດໄປ ການລວມ ຜືນແຜ່ນດິນດຽວ ຈຶ່ງແມ່ນການກະທຳຂອງຂະບວນລາວອິດສະຫຼະແທ້.

ຄັ້ນອົບພະຫຍົບໜີໄປອາໄສຢູ່ປະເທດໄທ ດ້ວຍເຫດຈຳເປັນທີສືບເນື່ອງມາຈາກຝຣັ່ງແລ້ວ, ລາວອິດສະຫຼະດ້ວຍຈິດໃຈສາມັກຄີ ສ້າງສັນກຳລັງຊາດຈຶ່ງຍົກຍ້ອງໃຫ້ເຈົ້າເພັດຊະລາດ ເປັນຜູ້ນຳຜູ້ໜຶ່ງອີກໃນຂະບວນການກູ້ຊາດ ນັບແຕ່ວັນທີ່ 1 ທັນວາ 1946 ເປັນຕົ້ນມາຈົນຮອດວາລະໄດ້ກັບຄືນສູ່ມາຕຸພູມ ພາຍຫຼັງຍຸບລັດຖະບານ ລາວ ອິດສະຫຼະ ໃນວັນທີ 24/10 ປີ 1949. ການຍຸບລັດຖະບານນີ້

ແມ່ນຄະນະລາວອິດສະຫຼະ (ແຝງ) ເປັນຜູ້ກະທຳ ໂດຍບໍ່ໄດ້ປະຊຸມຄະນະລັດຖະມົນຕີ. ບໍ່ເປັນເອກະພາບກັນ. ລາວອິດສະຫຼະແທ້ບໍ່ມີໃຜຮູ້ນຳ. ທັນໃດນັ້ນເຈົ້າສຸພານຸວົງກໍ່ກູ້ເອົາທຸງຊາດວົງເດືອນ ແລ້ວພັບໃສ່ໃນກະເປົາເດີນ ທາງໜີໄປສູ່ສະໜາມຮົບທຳການຕໍ່ສູ້ກູ້ຊາດຮ່ວມກັບບັນດາກຳລັງຮັກຊາດພາຍໃຕ້ຮົ່ມ ທຸງໄຕຣ ລົງຜືນນີ້ຈົນໄດ້ໄຊຊະນະສຸດທ້າຍ. ຍ້ອນການກະທຳດ້ວຍນ້ຳມືຂອງເຈົ້າສຸພານຸວົງໃນຄັ້ງນັ້ນ, ລວມກັບມະຫາຊົນລາວ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ, ທຸງວົງເດືອນອັນເປັນທຸງຊາດລາວນັ້ນຈຶ່ງສືບຕໍ່ລວມຂະບວນປະຕິວັດ ດຳເນີນການປົດປ່ອຍຊາດ ແລະສ້າງຕັ້ງ ສປປ ລາວ ສຳເລັດໃນວັນທີ 2 ທັນວາ 1975.

ທີ່ກ່າວມານີ້ ລ້ວນແຕ່ແມ່ນຂໍ້ມູນຄວາມຈິງ ທີ່ຕິດພັນກັບການປະກາດລວມຜືນແຜ່ນດິນລາວ ເປັນແຜ່ນດິນດຽວໃນສະໄໝລາວອິດສະຫຼະກູ້ຊາດ. ຂໍ້ມູນທີ່ກ່າວນີ້ບໍ່ເຄີຍເປີດເຜີຍມາກ່ອນນະທີ່ແຫ່ງໃດ.

# ທຸງຊາດ

ສະເໜີໂດຍ ທຳ ໄຊຍະສິດເສນາ
ແຕ່ງໂດຍ ເບນນ້ອຍ

* ຜືນທຸງຊາດຮື່ມກວ້າງ    ກວມແຜ່ນພູມສະຖານ
ຕະການຕາ ເງົາງາມ    ເຫຼື່ອມປະຊາແຊງເຊື້ອ
ສາມສີ ຊົງຄຸ້ນຄ້ຳ    ຣວມທົວທຳມະຊາດ
ມີຄວາມໝາຍເອກອ້າງ    ຈຶ່ງວາງແຕ້ມແຜ່ນສະໃບ

* ສີແດງ ປຸນປຽບໄດ້    ຢາດເລືອດຊາວປະຊາ
ອຸດທິດຕົນກວາຍຊີວາ    ເພື່ອຊາດຢືນຍາວໝັ້ນ
ບາກບັ່ນ ບຸກບືນໜ້າ    ສາມັກຄີເດັດດ່ຽວ
ເປັນໃຈດຽວກອບກູ້    ຊູຊວ້ານຊາດເຮົາ

* ຄ່ຽງຄູ່ກັບ ສີຟ້າ    ອັນສວຍເດັ່ນງາມຕາ
ອຸປະມາດິນລາວ    ຮັ່ງມີຈະເລີນລ້ວນ
ມວນຊັບສິນໃນພື້ນ    ສາທາລາ ຊຸມຊື່ນ
ປະກະພິແຜ່ນພື້ນ    ມີຂອງຄ້ຳ ຄ່າແພງ

* ວົງເດືອນເພັງສ່ອງແຈ້ງ    ຂາວສະອາດບວນໄຍ
ປຽບດັ່ງດວງໃຈລາວ    ຜ່ອງໃສ ບໍ່ໝອງເສົ້າ
ລວມເປັນຜືນ ທຸງເຕົ້າ    ໂຮມເອົາເອກະລາດ
ລາວມີທຸງຊາດແລ້ວ    ໂພໄຊຊື່ນຮື່ມເຢັນ
ທ່ານເອີຍ !

# ເອກະລັກທຸງຊາດລາວ

ໄດ້ກ່າວແລ້ວວ່າ ທຸງຊາດລາວມີທີ່ມາແນວໃດເກີດຂຶ້ນເວລາໃດ, ແມ່ນຜູ້ໃດເປັນຜູ້ລິເລີ້ມຈິນຕະນາອອກຫືອຄິດປະດິດສ້າງຮູບແບບທຸງຊາດລາວ.

ເວລາສະຫຍາມປົກຄອງລາວ ສະຫຍາມໄດ້ນຳທຸງຊາດສະຫຍາມເຂົ້າມາ ເວລາຝຣັ່ງປົກຄອງລາວ ຝຣັ່ງກໍນຳທຸງຊາດຝຣັ່ງເຂົ້າມາ ໂດຍທີ່ບໍ່ມີທຸງຊາດລາວ, ບໍ່ມີເອກະສານຫຼັກຖານໃດຢັ້ງຢືນພິສູດວ່າ ມີທຸງຊາດລາວມາກ່ອນນັ້ນ. ສະນັ້ນ ຈຶ່ງມີເຫດຜົນໜັກໜ່ວງທີ່ຕ້ອງມີທຸງຊາດຂອງລາວ ໃນເວລາທີ່ລາວມີເອກລາດແລ້ວແລະແລ້ວ ຄະນະກູ້ຊາດລາວອິດສະຫຼະຕົວຈິງ, ໃນນາມມະຫາຊົນຄົນລາວ, ຈຶ່ງມີມະຕິໃຫ້ມີທຸງຊາດນັບແຕ່ບັດນັ້ນເປັນຕົ້ນມາ.

ເອກະລັກຂອງທຸງຊາດລາວ ຕາມມະຕິດັ້ງເດີມຂອງຜູ້ລິເລີ້ມຈິນຕະນາ ມີລັກສະນະຖືກຕ້ອງດັ່ງນີ້ :

## 1. ສີ :

ມີສາມສີຄື ສີຂາວ, ສີແຫຼ້ໝາກຄໍ້ ( ຫຼື ສີຟ້າແກ່ ) ແລະ ສີແດງ, ຮ້ອງວ່າທຸງໄຕຣຣົງ.

## 2. ຮູບ ແລະ ຂະໜາດ

- ສີຂາວມີຮູບເປັນວົງກົມ ຢູ່ໃນໃຈກາງຂອງແກບສີແຫຼ້

ໝາກຄໍ້ ( ສີຟ້າແກ່ ) ມີຂະໜາດເສັ້ນຜ່າສູນກາງທ່ກັບ 4/5 ຂອງລວງກວ້າງຂອງສີແຫຼ້ໝາກຄໍ້ (ສີຟ້າແກ່).

- ສີແຫຼ້ໝາກຄໍ້ ( ສີຟ້າແກ່ ) ເປັນແຖບໆດຽວຢູ່ກາງ ຍາວຕາມທາງນອນອົມເອົາວົງກົມສີຂາວໄວ້ໃຈກາງ ມີຂະໜາດກວ້າງທ່ກັບສອງເທົ່າຂອງແຖບສີແດງ.
- ສີແດງ ( ແດງເຂັ້ມ ) ເປັນແຖບສອງແຖບທ່ກັບ ຍາວຕາມທາງນອນ ຕິດກັບຂອບສອງຂອບຂອງສີຟ້າແກ່ ແຕ່ລະແຖບມີຂະໜາດທ່ກັບກັບເຄິ່ງໜຶ່ງ (1/2) ຂອງແຖບສີແຫຼ້ໝາກຄໍ້ ( ສີຟ້າແກ່ ).

ທັງໝົດນັ້ນ ເມື່ອຕໍ່ຕິດເຂົ້າກັນແລ້ວ ຈະຕ້ອງໄດ້ຂະໜາດທາງຍາວສອງເທົ່າຂອງທາງກວ້າງ.

## 3. ຄວາມໝາຍ ແລະ ຄວາມອະທິບາຍລະອຽດ

- ສີຂາວປອດເປັນຮູບວົງກົມ ( ເວົ້າຕາມສູດວິທະຍາສາດການຄຳນວນຄື້ນແສງ ) ແຕ່ຮູບວົງກົມໃນນີ້ບໍ່ແມ່ນຮູບວົງກົມທຳມະດາ, ຫາກແມ່ນຮູບວົງກົມທີ່ໄດ້ມາຈາກຮູບດວງຈັນວັນເພັງ 15 ຄ່ຳ ຊຶ່ງແມ່ນພະຈັນເຕັມດວງ, ມີສີແສງປອດໃສຂາວສະອາດສະຫວ່າງສະໄຫວໜ້າຊື່ນໜ້າຊົມສົມມະນັດ ແກ່ຊາວໂລກມະນຸດທຸກຊາດ ທຸກພາສາ ທຸກສາດສະໜາ. ແສງອ່ອນນວນໃຍຊວນໃຫ້ຕິດໃຈໃຝ່ຝັນຫາບໍ່ຮູ້ລືມ ຈົນເກີດສຳນວນພາ

ສາວ່າ : " ດື່ມນ້ຳເຜີ້ງໃນພະຈັນ " ແສງເຢັນຫູເຢັນຕາເຢັນສະບາຍ ເບົາບາງໝົດທັງເນື້ອທັງຕົວ. ຕ່າງຈາກແສງພະອາທິດທີ່ຮ້ອນແຜດເຜົາ ເຫື່ອໄຫຼໄຄຍ້ອຍ ຕ້ອງຟ້າວແລ່ນເຂົ້າຊຸ້ນຮົ່ມ ຊອກຫາຄວາມເຢັນ ຊຶ່ງລວມຄວາມວ່າ : ດວງຈັນນັ້ນ ມີແຕ່ໃຫ້ຄວາມຮົ່ມເຢັນ ເປັນສຸກສົດຊື່ນແກ່ຊີວິດມະນຸດ, ສັດ ແລະ ພືດພັນ.

ເລື້ອງສີຂາວນີ້ ມັກນິຍົມກືວ່າ ແມ່ນຄວາມຂາວບໍລິສຸດ ສະອາດຜຸດຜ່ອງປອດໃສ ສຸດຈະລິດ ບໍ່ມີມົນທິນມົວໝອງ ( ບວດນາງຊີ ນາງຂາວ, ຍາພໍ່ພະຂາວ ) ຊຶ່ງລ້ວນແຕ່ໝາຍເອົາຄວາມສະອາດປອດໃສ ຈິດໃຈຊື່ສັດ ບໍ່ຫຼອກລວງຫຼົບປີ້ນ ບໍ່ເປັນຂີ້ທູດສາມານ, ບໍ່ຂີ້ສໍ້ຕໍແຫຼ, ບໍ່ທໍລະຍົດທັກຫຼັງ, ບໍ່ທຳລາຍຊາດບໍ່ທຳລາຍຕົນເອງ ...

ຂອບວົງມົນຂອງດວງພະຈັນ ແມ່ນຂອບສູນກາງ ແມ່ນຈຸດລວມສູນທ້ອນໂຮມກຳລັງສາມັກຄີມະຫາສາມັກຄີໃນຊາດໃຫ້ເປັນຈິດໜຶ່ງໃຈດຽວເປັນໜຶ່ງບໍ່ມີສອງ, ລວມອຳນາດການເມືອງ ການປົກຄອງເຂົ້າໄວ້ເປັນກ້ອນດຽວໜຽວແໜ້ນ, ບໍ່ແຕກແຫງ, ບໍ່ບິດເບືອນແຕກແຍກທໍລະຍົດ, ຕາມຄະຕິພາສິດທີ່ວ່າ : " ທ້ອນໂຮມແຮງກັນລາວຢູ່ - ແຕກພວກກັນຢູ່ລາວຕາຍ ".

ອີກທັດສະນະໜຶ່ງ ທຸງພະຈັນນີ້ ມີສຳພັດໃກ້ຄຽງກັບຄຳວ່າ : " ວຽງຈັນ " ຊຶ່ງມີໃຈຄວາມວ່າ : ນະຄອນຂອງດວງຈັນ ຫຼື ນະຄອນທີ່ທຳດ້ວຍດວງຈັນເດັ່ນດວງສີຂາວສີສະອາດຜ່ອງໃສ, ທີ່ເລືອກໃຫ້ເປັນຊື່ຂອງນະຄອນຫຼວງຂອງລາວ ຄືນະຄອນຫຼວງວຽງຈັນ. ນີ້ກໍ່ກື່ວ່າເປັນທັດສະນະທີ່ດີ ມີສະເໜີອີກທັດສະນະໜຶ່ງ.

ສີແຫຼໝາກຄໍ້ ຫຼື ສີຟ້າແກ່ ເປັນແຖບລອຍທາງນອນ, ອິມເອົາດວງຈັນໄວ້ໃຈກາງ ໄດ້ເຄົ້າມາຈາກທ້ອງຟ້ານະພາກາດສີຟ້າແກ່ ທີ່ສະຖິດຢູ່ສູງເໜືອສິ່ງໃດທັງໝົດໃນໂລກ, ບໍ່ມີຜູ້ໃດຢຽບຢ້ຳທຳລາຍຍ່ອງຢີໄດ້, ອັນໝາຍເອົາອຳນາດອະທິປະໄຕອັນສູງສຸດຂອງຊາດ ທີ່ປົກຄອງຕົນເອງດ້ວຍສິດທິເສລີພາບ ປະຊາທິປະໄຕດ້ວຍອຳນາດອະທິປະໄຕ ບໍ່ມີອາຣັກຂາ, ຫຼື ບໍ່ມີອານານິຄົມຂອງຊາດອື່ນໃດ, ຈະແມ່ນທາງກົງ ຫຼື ທາງອ້ອມແອບແຝງກໍບໍ່ມີເດັດຂາດ. ອີກທັດສະນະໜຶ່ງກໍ່ໝາຍເອົາທິດເບື້ອງສູງໃນພຶດທະທຳມະຕາມຄວາມເຊື່ອສັດທາປະສາທະຂອງຜູ້ເຊື່ອກືໃນຄະລິທາດສະກຸະທຳ. ອີກທັ້ງໝາຍເຖິງຄວາມອຸດົມຮັ່ງມີທາງພືດພັນທັນຍາຫານດ້ວຍ.

ສີແດງເຂັ້ມ ໄດ້ເຄົ້າມາຈາກຈິດໃຈກ້າກັ່ນຫານຫ້າວປະຕິວັດມາຈາກເລືອດຮັກຊາດ. ອັນເລືອດຮັກຊາດ

ແພງເຊື້ອນີ້ມີສີແດງເຂັ້ມ ແມ່ນໄດ້ຫຼັ່ງໄຫຼໃນແຜ່ນດິນລາວມາແລ້ວໃນອະດີດຕະການອັນຮຸ່ງເຮືອງ ແລະ ຍັງຈະຫຼັ່ງໄຫຼຕໍ່ໄປໃນອະນາຄົດ ເພື່ອປົກປັກຮັກສາ ແລະ ປ້ອງກັນຜືນແຜ່ນດິນອັນແສນຮັກຫວງແຫນຂອງລາວທັງຊາດ. ສີແດງເປັນສອງແຖບ, ແຕ່ລະແຖບຢູ່ຂອບນອກລອຍຕາມທາງນອນ, ໜ້າທີ່ປ້ອງກັນຕິດກັບຂອບສີຟ້າທັງສອງຂອບ ... ແມ່ນເພື່ອປ້ອງກັນສີຟ້າອົມພະຈັນອັນໝາຍເຖິງອຳນາດອະທິປະໄຕ ຫຼື ຄວາມເປັນເອກລາດຂອງຊາດ, ໝາຍມີເຂດນ້ຳແດນດິນ ເຂດຟ້ານະພາກາດຂອງລາວໃຫ້ເປັນຂອງລາວຕະຫຼອດໄປ ຜູ້ໃດບຸກລຸກລ່ວງລ້ຳບໍ່ໄດ້ ແລະ ***ປ້ອງກັນຈິດວິນຍານຂອງຊາດລາວທີ່ຝັງຢູ່ໃນດວງຈັນນັ້ນ.***

ທີ່ກ່າວມາຂ້າງເທິງນີ້ ແມ່ນເອກະລັກພິເສດສະເພາະຂອງທຸງຊາດລາວ ທີ່ໃຊ້ໃນປະຈຸບັນ. ມີສາມສີ : ຂາວ, ຟ້າແກ່, ແດງເຂັ້ມ. ຮ້ອງຕາມສາກົນວ່າ : ທຸງໄຕຣຣົງ, ເປັນເອກະລັກຄົບກ້ວນໄດ້ມາດຕາການສາກົນນິຍົມນານາຊາດ ແຕ່ການຈັດວາງລວດລາຍ ສະຫຼັບສີແມ່ນເປັນໄປຕາມທັດສະນະຄະຕິ ຂອງມະຕິມະຫາຊົນຄົນລາວທັງຊາດ.

ຜູ້ຕັດຫຍິບທຸງຊາດລາວຜືນທຳອິດແມ່ນປ້າຄຳຈັນ ( ເວລານັ້ນຍັງບໍ່ໃຊ້ນາມສະກຸນ ) ປ້າຄຳຈັນ ມີກິດຈະການຕັດຫຍິບປະຈຳຄອບຄົວເປັນອາຊີບ ; ມີຈັກຫຍິບສອງຈັກຕັ້ງຢູ່ຫ້ອງຕຶກຊັ້ນດຽວໃນ

ຄຸ້ມວັດບ້ານອີນແປງ ຕາແສງວັດຈັນເມືອງຈັນທະບູລີກໍາແພງນະຄອນວຽງຈັນໃນປາງນັ້ນ ( ດຽວນີ້ແມ່ນເຂດໜຶ່ງຂອງບ້ານຫາຍໂສກ). ປ້າຄໍາຈັນ ຈັດການຕັດຫຍິບທຸງຊາດລາວຕາມການຊີ້ແນະແລະ ຕາມຮູບແຜນຜັງຂອງທ້າວ ທໍາ ໄຊຍະສິດເສນາ ຜູ້ເປັນນ້ອງຄີງ ແລະ *ເປັນປະທານກໍາມະການຂອງຂະບວນການລາວອິດ ສະຫຼະກູ້ເອກລາດ.*

ການໃຊ້ທຸງຊາດລາວຜືນປະຈຸບັນ ແມ່ນເລີ້ມໃຊ້ມາແຕ່ວັນກໍາເນີດເກີດຂຶ້ນ ຄືວັນທີ 12 ຕຸລາ ຄສ 1945 ຕະຫຼອດມາ ໂດຍບໍ່ຂາດໄລຍະ. ຫຼັງຈາກ ຄສ 1946 ຮອດປີ 1974, ພວກຈັກກະພັດ ໄດ້ຟື້ນຟູໃຫ້ພະລາຊະວັງຫຼວງພະບາງ ນໍາເອົາທຸງຊ້າງສາມຫົວຄືນມາໃຊ້ແຂ່ງຊີງລັດສະໝີກັນ ແຕ່ແລ້ວທຸງຊ້າງສາມຫົວກໍ່ໄດ້ເລີກລາຫາຍໄປ.

ເວລານີ້ ໃນເວທີສາກົນໂລກ ມີທຸງຊາດລາວປິວສະບັດພັດແກວ່ງຢູ່ຍອດເສົາທຸງ ຕັ້ງລຽງລາຍຢູ່ຄູ່ຄຽງກັບທຸງຊາດອື່ນທຸກຊາດໃນທຸກສະຖານທີ່ສໍາຄັນໆຢ່າງສະເໝີພາບຄຽງ ບ່າຄຽງໄຫຼ່ກັນ, ເປັນຕົ້ນຢູ່ອົງການສະຫະປະຊາຊາດ ທີ່ນະຄອນນິວຢອກສະຫະລັດອາເມລິກາ ແລະ ຢູ່ທຸກເມືອງທີ່ມີອົງການນີ້ຕັ້ງຢູ່, ຢູ່ອົງການພຸດທະສາດສະໜາສໍາພັນໂລກຢູ່ອົງການກິລາເອຊຽນເກມຢູ່ອົງການກິລາ ໂອແລມປິກ. ຢູ່ພາຍໃນປະເທດລາວ ແມ່ນມີທຸງຊາດລາວຕິດຕັ້ງເດຍລະດາດທົ່ວໄປ ຕາມໂຮງຮຽນ, ຄ້າຍທະຫານ, ຄ້າຍຕໍາຫຼວດ, ສໍານັກງານສະຖານທີ່ທາງການ, ຕາມວັດວາອາຮາມ ຕາມ

ຫົວເຮືອ ຕາມປີກເຮືອບິນ. ໂດຍສະເພາະໃນວັນສຳຄັນຂອງຊາດ ( ວັນຊາດ, ວັນລັດຖະທຳມະນູນ, ວັນກອງທັບ ... ) ມີການປະດັບປະດາທຸງຊາດຕາມເຄຫະສະຖານບ້ານເຮືອນ ຕາມຖະໜົນຫົນທາງຢ່າງວິຈິດງົດງາມ ບາງຜ່ອງກໍ່ຈັດດອກໄຟຟ້າສະຫຼັບສີເປັນທຸງຈັບເຜີງ. ເວລານັກກິລາໄປຮ່ວມເກມກິລາຕ່າງປະເທດ ກໍ່ເອົາ ທຸງຊາດລາວໄປສະແດງໃຫ້ເຫັນວ່າມີຊາດລາວຢູ່ດ້ວຍ ເພື່ອຊີງໄຊຊະນະ ຄັນໄດ້ໄຊຊະນະ ກໍ່ໂບກທຸງຊາດກວັດແກວ່ງໄປມາ ສະແດງກຽດສັກສີຄວາມສາມາດຂອງຊາດລາວທັນທີ, ຊຶ່ງຊາວລາວພາກັນຮ້ອງໂຮສະອອນສະອື້ນເກີງໃຈ.

24 / VII
ຫ້າມຈຳໜ່າຍ

## ທຸງຊາດປະຕິບັດໜ້າທີ່ຂອງຕົນຄືແນວນີ້ :

1. ສະແດງປາກົດຕົວຕົນຂອງຊາດລາວຢູ່ໃນທີ່ທຸກແຫ່ງທີ່ມີທຸງຊາດລາວ ; ໃຫ້ສະຕິສຳນຶກແກ່ລູກລາວທຸກເວລາວ່າ : ຕົນນັ້ນມີຊາດ, ເປັນເຈົ້າຂອງປະເທດຊາດແທ້ຈິງ.
2. ພິສູດສະແດງວ່າ ຊາດລາວມີເອກະລາດ ມີອຳນາດອະທິປະໄຕປົກຄອງຕົນເອງ, ເປັນເຈົ້າຕົນເອງ, ມີສິດທິເສລີພາບ ປະຊາທິປະໄຕ, ສະເໝີພາບເທົ່າທຽມກັບຊາດອື່ນທຸກໆຊາດໃນໂລກ.
3. ຊັກຈູງ, ໂນ້ມນ້າວ, ປຸກປັ່ນຈິດໃຈ " ລູກລາວ ! ", ໂດຍຮູບເອກະລັກອັນດີພິເສດຂອງທຸງຊາດເອງ, ໃຫ້ຕື່ນຕົວມີສະຕິຮູ້ເມື່ອຄິງສະເໝີວ່າ : ຕົນຈະງົດ, ຈະຫຼີກເວັ້ນການທຳຊົ່ວ, ກໍ່ກຳທຳເຂັນທັງສິ້ນທັງປວງ ; ຕົນຈະກະທຳແຕ່ຄວາມດີ ມີຄຸນແກ່ຕົນ ແລະ ແກ່ຜູ້ອື່ນ.
4. ກະຕຸ້ນປຸກປັ່ນຈິດໃຈ ທະຫານ ຕຳຫຼວດ ນັກກິລາ ຕະຫຼອດຮອດປະຊາຊົນບັນດາເຜົ່າໃຫ້ຮຶກເຫີມ, ຫ້າວຫານ, ກ້າກັ່ນ, ບຸກບືນສູ້ຊົນ, ພາກພຽນພະຍາຍາມຕໍ່ໜ້າອຸປະສັກ ຕໍ່ໜ້າຄວາມຫຍຸ້ງຍາກໃນການດຳລົງຊີວິດ, ຕໍ່ໜ້າສັດຕູ -- ຈົນກຳໄດ້ຄວາມສຳເລັດ ແລະ ໄຊຊະນະ.

ຜູ້ລິດຈະນາ

ທ. ທຳ ໄຊຍະສິດເສນາ

ອະນຸມັດພິມ ເລກທີ 47/ພຈ/2002

ຈັດພິມຄັ້ງທີ 1 ຈຳນວນ 3000 ເຫຼັ້ມ
ໂດຍການອຸປະກາລະຂອງ :

- ທ່ານ ທຳ ໄຊຍະສິດເສນາ
ລູກຊາຍຂອງ ທ້າວ ທິດສິມສີ ອິນທະວົງ

- ທ່ານ ວິໄນ ອິນທະວົງ
ລູກຊາຍຂອງ ທ່ານ ບົວຈັນ ອິນທະວົງ

*ສະຫງວນລິກຂະສິດຕາມກົດໝາຍ*
*ທັງພາຍໃນ ແລະ ຕ່າງປະເທດ*

ພິມທີ່ ວິສາຫະກິດໂຮງພິມສຶກສາ